ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ

PHOUTHEN PASAXON

ສຳນັກງານຕັ້ງຢູ່ອາຄານລະບະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

01-08 ກໍລະກົດ 2026
ປີທີ 15
ສະບັບທີ 1072
ລາຍສັບປະດາ

## ປະທານສະພາແຫ່ງຊາດ ພົບປະປະທານາທິບໍດີມຽນມາ



(ສພຊ) - ຕອນບ່າຍວັນທີ 3 ກໍລະກົດນີ້ ທີ່ສະພາແຫ່ງຊາດ, ທ່ານ ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດແຫ່ງ ສປປລາວ ໄດ້ໃຫ້ການຕ້ອນຮັບ ແລະ ພົບປະທ່ານ ພົອ. ມິນ ອອງ ລາຍ ປະທານາທິບໍດີແຫ່ງສາທາລະນະລັດສະຫະພາບມຽນມາ ໃນໂອກາດຢ້ຽມຢາມລັດຖະກິດຢູ່ສປປລາວ ລະຫວ່າງວັນທີ 3-5 ກໍລະກົດ 2026.

ໂອກາດດັ່ງກ່າວ, ທ່ານ ໄຊສົມພອນ ພົມວິຫານ ໄດ້ສະແດງຄວາມຍິນດີຕ້ອນຮັບຢ່າງ

ອ່ານຕໍ່ໜ້າ 5



ແນວຄິດປະທານ
ໄກສອນ ພົມວິຫານ
ຜູ້ນຳທີ່ປະຊາຊົນເຄົາລົບຮັກ

ມີແຕ່ລົງເຖິງຮາກຖານເທົ່ານັ້ນ ຈຶ່ງຈະເສີມຂະຫຍາຍໄດ້ປະຊາທິປະໄຕໃນໝູ່ປະຊາຊົນ, ໃຫ້ປະຊາຊົນໄດ້ເຂົ້າຮ່ວມປຶກສາຫາລືກ່ຽວກັບແນວທາງນະໂຍບາຍຂອງພັກ ແລະ ການຈັດຕັ້ງຜັນຂະຫຍາຍນະໂຍບາຍດັ່ງກ່າວ ຢູ່ທ້ອງຖິ່ນຮາກຖານຂອງເຂົາເຈົ້າ.

(ນິພົນເລືອກເຟັ້ນ ເຫຼັ້ມ 3, ໜ້າ 362)

ອ່ານຕໍ່ສະບັບໜ້າ

## ກອງປະຊຸມຮ່ວມ ຄະນະລັດຖະບານ ແລະ ຄະນະປະຈຳສະພາແຫ່ງຊາດ ຄັ້ງທີ I




(ສພຊ) - ໂດຍປະຕິບັດຕາມກົນໄກການປະສານງານລະຫວ່າງຄະນະປະຈຳສະພາແຫ່ງຊາດ ແລະ ຄະນະລັດຖະບານ, ໃນວັນທີ 2 ກໍລະກົດນີ້ ທີ່ສຳນັກງານນາຍົກລັດຖະມົນຕີ ໄດ້ມີການດຳເນີນກອງປະຊຸມຮ່ວມລະຫວ່າງຄະນະລັດຖະບານແລະຄະນະປະຈຳສະພາແຫ່ງຊາດຄັ້ງທີ I ປະຈຳປີ 2026 ພາຍໃຕ້

ອ່ານຕໍ່ໜ້າ 5

## ກຊມຍທ ສຳເລັດກອງປະຊຸມໃຫຍ່ສະມາຊິກພັກ ຄັ້ງທີ I



(ສພຊ) - ກອງປະຊຸມໃຫຍ່ສະມາຊິກພັກ ຄັ້ງທີ I ຂອງຄະນະພັກຮາກຖານກຳມາທິການກົດໝາຍແລະຍຸຕິທຳ(ກຊມຍທ) ໄດ້ໄຂຂຶ້ນໃນຕອນເຊົ້າຂອງວັນທີ 29 ມິຖຸນາ 2026 ທີ່ສະພາແຫ່ງຊາດໂດຍການເປັນປະທານຂອງສະຫາຍ ນາງ ທຸມມາລີ ວົງພະຈັນ ກຳມະການສູນກາງພັກ, ເລຂາໜ່ວຍພັກຮາກຖານ, ປະ

ອ່ານຕໍ່ໜ້າ 8

## ຍົກສູງຄຸນນະພາບດ້ານເນື້ອໃນ ກອງປະຊຸມສະໄໝວິສາມັນເທື່ອທີ 1



(ສພຊ) - ວັນທີ 3-4 ກໍລະກົດ 2026, ສະພາແຫ່ງຊາດ(ສພຊ) ໄດ້ຈັດກອງປະຊຸມຍົກສູງຄຸນນະພາບດ້ານເນື້ອໃນໃຫ້ແກ່ບັນດາທ່ານສະມາຊິກສະພາແຫ່ງຊາດ (ສສຊ) ເພື່ອກະກຽມຄວາມພ້ອມແກ່ການດຳເນີນກອງປະຊຸມສະໄໝວິສາມັນ

ອ່ານຕໍ່ໜ້າ 8

## ສສຊ ຢ້ຽມຢາມໂຮງງານກັ່ນຫຼອມ ວັດຖຸມີຄ່າ ລາວ-ສາກົນ



(ສພຊ) - ວັນທີ 4 ກໍລະກົດ 2026 ທ່ານ ນາງ ສູນທອນ ໄຊຍະຈັກ ເລຂາທິການສູນກາງພັກ, ຮອງປະທານສະພາແຫ່ງຊາດ ພ້ອມດ້ວຍສະມາຊິກສະພາແຫ່ງຊາດ(ສສຊ) 105 ທ່ານ ໄດ້ເຄື່ອນໄຫວຢ້ຽມຢາມໂຮງງານກັ່ນຫຼອມ ວັດຖຸມີຄ່າລາວ-ສາກົນ ຕັ້ງຢູ່ນະຄອນຫຼວງວຽງຈັນ, ໂດຍການຕ້ອນຮັບຂອງທ່ານ ອາລຸນແກ້ວ ກິດຕິຄຸນ ປະທານຄະນະກຳມະການດ້ານຍຸດທະສາດ ແລະ ການວາງແຜນບໍລິສັດ ພີທີແອວ ໂຮນດິງ ຈຳກັດ ພ້ອມດ້ວຍຄະ ນະຜູ້ບໍລິຫານຂອງໂຮງງານກັ່ນຫຼອມ ວັດຖຸມີຄ່າ ລາວ-ສາກົນ, ທະນາຄານຄຳລາວ ແລະ ບໍລິສັດ ພີທີແອວ ໂຮນດິງ ຈຳກັດ.

ໂອກາດນີ້, ທ່ານ ອາລຸນແກ້ວ ກິດຕິຄຸນ ໄດ້ສະເໜີສະພາບລວມຂອງໂຄງການ ແລະ ວິໄສທັດຍຸດທະສາດຂອງການສ້າງຕັ້ງໂຮງງານກັ່ນຫຼອມ ວັດຖຸມີຄ່າ ລາວ-ສາກົນ ເຊິ່ງທ່ານໃຫ້ຮູ້ວ່າ: ການສ້າງຕັ້ງໂຮງງານກັ່ນຫຼອມ ວັດຖຸມີຄ່າ ລາວ-ສາກົນ ຖືເປັນບາດກ້າວອັນສຳຄັນຕໍ່ການປະກອບສ່ວນຈັດຕັ້ງຜັນຂະຫຍາຍຄວາມຕັ້ງໃຈຂອງພັກ ແລະ ລັດຖະບານ ໃນການສ້າງສາພັດທະນາລະບົບນິເວດຂອງອຸດສາຫະກຳຄຳລາວ ໃຫ້ໄດ້ມາດຕະຖານສາກົນ, ຍົກລະດັບ

ອ່ານຕໍ່ໜ້າ 5

## ກອງປະຊຸມສະໄໝວິສາມັນເທື່ອທີ 1 ຂອງສະພາແຫ່ງຊາດ ຈະຮັບຮອງມະຕິ 4 ສະບັບ



(ສພຊ) - ຕອນບ່າຍວັນທີ 02 ກໍລະກົດນີ້, ທ່ານ ບຸນຈັນ ສິວົງພັນ ກຳມະການສູນກາງພັກ, ກຳມະການຄະນະປະຈຳ, ຫົວໜ້າຫ້ອງວ່າການສະພາແຫ່ງຊາດ ໄດ້ຖະແຫຼງຂ່າວຕໍ່ສື່ມວນຊົນກ່ຽວກັບການດຳເນີນ

ອ່ານຕໍ່ໜ້າ 2

# ພິທີມອບ-ຮັບຖັງດັບເພີງ



(ສພຊ) - ວັນທີ 2 ກໍລະກົດນີ້ ທີ່ສະພາແຫ່ງຊາດ ໄດ້ຈັດພິທີມອບ-ຮັບຖັງດັບເພີງ ຈຳນວນ 100 ບັ້ງ ລວມມູນຄ່າທັງໝົດ 60 ລ້ານກີບ ໃຫ້ແກ່ສະພາແຫ່ງຊາດ, ຕາງໜ້າຮັບໂດຍທ່ານ ວິໄລວົງ ບຸດດາຄຳ ຮອງປະທານສະພາແຫ່ງຊາດ ແລະ ຕາງໜ້າມອບໂດຍທ່ານນາງ ຢູ ຮອນ ຊຸກ (YOO HYUN SOOK) ປະທານສະມາຄົມສິລະປະ ແລະ ແລກປ່ຽນວັດທະນະທຳແຊຣີງເຊິ່ງມີທ່ານ ບຸນທັນ ບຸນວິໄລ ຮອງຫົວໜ້າຫ້ອງວ່າການສະພາແຫ່ງຊາດ ແລະພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມເປັນສັກຂີພະຍານ

## ກອງປະຊຸມ...

(ຕໍ່ຈາກໜ້າ 1)

ກອງປະຊຸມສະໄໝວິສາມັນເທື່ອທີ 1 ຂອງສະພາແຫ່ງຊາດ ຊຸດທີ X ເຊິ່ງທ່ານໃຫ້ຮູ້ວ່າ: ກອງປະຊຸມສະໄໝວິສາມັນເທື່ອທີ 1 ຂອງສະພາແຫ່ງຊາດ ຊຸດທີ X ຈະໄຂຂຶ້ນໃນລະຫວ່າງວັນທີ6-10 ກໍລະກົດ 2026 ທີ່ຫ້ອງປະຊຸມໃຫຍ່ສະພາແຫ່ງຊາດໃຊ້ເວລາລວມທັງໝົດ 5 ວັນ ໂດຍຈະພິຈາລະນາ, ຕົກລົງບັນຫາສຳຄັນ ແລະ ຮີບດ່ວນ ຕາມທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ ແລະ ກົດໝາຍ ເຊິ່ງລະອຽດມີດັ່ງນີ້:

1. ວຽກງານລັດຖະບານ ມີ 4 ເນື້ອໃນ

1)ພິຈາລະນາ,ຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ,ແຜນງົບປະມານແຫ່ງລັດ, ແຜນເງິນຕາ 6 ເດືອນຕົ້ນປີ 2026 ແລະ ທິດທາງແຜນການ 6 ເດືອນທ້າຍປີ 2026;

2)ພິຈາລະນາ,ຮັບຮອງເອົາວາລະແຫ່ງຊາດ ວ່າດ້ວຍການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກຂອງປະຊາຊົນ;

3) ຮ່າງກົດໝາຍວ່າດ້ວຍຄັງເງິນແຫ່ງລັດ(ສ້າງໃໝ່);

4) ຮ່າງກົດໝາຍວ່າດ້ວຍງົບປະມານແຫ່ງລັດ (ປັບປຸງ).

2. ບົດປະກອບຄຳເຫັນຂອງຄະນະປະຈຳສະພາແຫ່ງຊາດຕໍ່ວຽກງານລັດຖະບານ ມີ 2 ບົດ ຄື:

1) ບົດປະກອບຄຳເຫັນຄະນະປະຈຳສະພາແຫ່ງຊາດ ຕໍ່ບົດລາຍງານຂອງລັດຖະບານກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ, ແຜນເງິນຕາ6ເດືອນຕົ້ນປີ 2026 ແລະ ທິດທາງແຜນການ 6 ເດືອນທ້າຍປີ 2026;

2) ບົດປະກອບຄຳເຫັນຄະນະປະຈຳສະພາແຫ່ງຊາດ ຕໍ່ວາລະແຫ່ງຊາດວ່າດ້ວຍການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກຂອງປະຊາຊົນ.

3. ມະຕິກອງປະຊຸມສະພາແຫ່ງຊາດ ເພື່ອຮັບຮອງເອົາເນື້ອໃນດັ່ງກ່າວ ມີ 4 ສະບັບ ຄື:

1) ມະຕິຮັບຮອງເອົາບົດລາຍງານຂອງລັດຖະບານວ່າດ້ວຍການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ, ແຜນເງິນຕາ6ເດືອນຕົ້ນປີ 2026 ແລະ ທິດທາງແຜນການ 6 ເດືອນທ້າຍປີ 2026;

2)ມະຕິຮັບຮອງເອົາວາລະແຫ່ງຊາດ ວ່າດ້ວຍການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກຂອງປະຊາຊົນ;

3) ມະຕິຮັບຮອງເອົາກົດໝາຍວ່າດ້ວຍຄັງເງິນແຫ່ງລັດ;

4) ມະຕິຮັບຮອງເອົາກົດໝາຍວ່າດ້ວຍງົບປະມານແຫ່ງລັດ.

ພ້ອມກັນນັ້ນ, ທ່ານຍັງແຈ້ງໃຫ້ຊາບວ່າ: ໃນໄລຍະກະກຽມ ແລະ ດຳເນີນກອງປະຊຸມ, ຫ້ອງວ່າການສະພາແຫ່ງຊາດ ໄດ້ຈັດຕັ້ງໜ່ວຍງານຮັບຄຳສະເໜີຂອງປະຊາຊົນຜ່ານໂທລະສັບສາຍດ່ວນ ເພື່ອຮັບເອົາຄຳຄິດຄຳເຫັນແລະຄຳສະເໜີໂດຍກົງຈາກປະຊາຊົນ ທີ່ຈະສົ່ງໄປຍັງກອງປະຊຸມສະພາແຫ່ງຊາດ ຕາມຂໍ້ມູນ ແລະ ວິທີການດັ່ງລຸ່ມນີ້:

•ນ້ຳເບີສາຍດ່ວນ:156 ນັບແຕ່ວັນທີ 3-10 ກໍລະກົດ 2026 ໃນໂມງລັດຖະການ

• ອີເມວ: nalao.156 @gmail.com

• App: Laona



### ແຈ້ງການ
### ຂອງຫ້ອງວ່າການສະພາແຫ່ງຊາດ

ອີງຕາມມາດຕາ 58 ຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ສະບັບປັບປຸງປີ 2024 ກ່ຽວກັບການດຳເນີນກອງປະຊຸມສະໄໝວິສາມັນຂອງສະພາແຫ່ງຊາດ ແລະ ອີງຕາມມະຕິຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການດຳເນີນກອງປະຊຸມສະໄໝວິສາມັນເທື່ອທີ 1 ຂອງສະພາແຫ່ງຊາດ ຊຸດທີ X ສະບັບເລກທີ 169/ຄປຈ, ລົງວັນທີ 30 ມິຖຸນາ 2026.

ຫ້ອງວ່າສະພາແຫ່ງຊາດ ມີຄວາມຍິນດີ ແລະ ຂໍຖືເປັນກຽດແຈ້ງມາຍັງອົງການຈັດຕັ້ງພັກ, ລັດ ແລະ ພໍ່ແມ່ປະຊາຊົນລາວບັນດາເຜົ່າ ຊາບວ່າ: ກອງປະຊຸມສະໄໝວິສາມັນເທື່ອທີ 1 ຂອງສະພາແຫ່ງຊາດ ຊຸດທີ X ຈະຈັດຂຶ້ນຢ່າງເປັນທາງການ ລະຫວ່າງວັນທີ 6-10 ກໍລະກົດ 2026 ທີ່ຫ້ອງປະຊຸມໃຫຍ່ສະພາແຫ່ງຊາດ, ນະຄອນຫຼວງວຽງຈັນ.

ດັ່ງນັ້ນ, ຫ້ອງວ່າການສະພາແຫ່ງຊາດ ຈຶ່ງຂໍແຈ້ງມາເພື່ອຊາບດ້ວຍ.

ຜູ້ແທນປະຊາຊົນ PHOUTHEN PASAXON

# ທາບທາມຮ່າງກົດໝາຍທີ່ດິນສະບັບປັບປຸງ



(ສພຊ) - ກົມຄຸ້ມຄອງ ແລະ ພັດທະນາທີ່ດິນ, ກະຊວງກະສິກຳ ແລະ ສິ່ງແວດລ້ອມ ຮ່ວມກັບພະແນກກະສິກຳ ແລະ ສິ່ງແວດລ້ອມແຂວງຈຳປາສັກ ໄດ້ຈັດກອງປະຊຸມທາບທາມກົດໝາຍວ່າດ້ວຍທີ່ດິນ ແລະ ເຜີຍແຜ່ນິຕິກຳໃຕ້ກົດໝາຍ ໃນວັນທີ 2-3 ກໍລະກົດນີ້ ທີ່ສູນຄົ້ນຄວ້າ ແລະ ຜະລິດເມັດພັນເຂົ້າໂພນງາມນະຄອນປາກເຊ, ໂດຍການເປັນປະທານຮ່ວມຂອງທ່ານ ສີວາເມັງ ລີບົວປາວ ຮອງຫົວໜ້າກົມຄຸ້ມຄອງ ແລະ ພັດທະນາທີ່ດິນແລະທ່ານຄຳສອນ ເກດມາລາຮອງຫົວໜ້າຫ້ອງວ່າການແຂວງຈຳປາສັກ, ມີພາກສ່ວນກ່ຽວຂ້ອງເຂົ້າຮ່ວມ.

ທ່ານ ຄຳສອນ ເກດມາລາ ມີຄຳເຫັນວ່າ: ພາຍຫຼັງທີ່ກົດໝາຍວ່າດ້ວຍທີ່ດິນ ປະກາດໃຊ້ແຕ່ປີ 2019 ເປັນຕົ້ນມາ, ການຄຸ້ມຄອງວຽກງານທີ່ດິນ ໄດ້ຖືກຈັດຕັ້ງປະຕິບັດຕາມທິດການສ້າງລັດແຫ່ງກົດໝາຍເທື່ອລະກ້າວ, ບັນຫາຂໍ້ຂັດແຍ້ງດ້ານທີ່ດິນໄດ້ຮັບການແກ້ໄຂດີຂຶ້ນ, ການນຳໃຊ້ທີ່ດິນເພື່ອເປົ້າໝາຍຕ່າງໆ ຕາມກົນໄກເສດຖະກິດຕະຫຼາດ ກໍໄດ້ຮັບການກະຕຸກຊຸກຍູ້ຫຼາຍຂຶ້ນ, ສຳເລັດການມອບວຽກງານຂຶ້ນທະບຽນອອກໃບຕາດິນ ແລະ ວຽກງານຈົດທະບຽນການ ເຄື່ອນໄຫວ ແລະ ການປ່ຽນແປງສິດນຳໃຊ້ທີ່ດິນບໍລິການປະຊາຊົນວ່ອງໄວຂຶ້ນ; ຄຽງຄູ່ກັບບັນດາດ້ານຕັ້ງໜ້າທີ່ກ່າວມາ ນັ້ນ, ຍັງມີຫຼາຍບັນຫາຄົງຄ້າງທີ່ຕິດພັນກັບການຄຸ້ມຄອງ,ຕິດຕາມກວດກາການນຳໃຊ້ທີ່ດິນ, ຍັງມີປາກົດການບຸກລຸກຈັບຈອງທີ່ດິນສາທາລະນະ ໂດຍສະເພາະໃນເຂດທີ່ດິນປ່າໄມ້,ຂໍ້ຂັດແຍ້ງເຂດແດນ,ຂໍ້ຂັດແຍ້ງການສືບທອດມູນມໍລະດົກ (ທີ່ດິນ) ແລະ ບັນຫາອື່ນໆ ທີ່ນັບມື້ເພີ່ມຂຶ້ນແລະແກ້ໄຂຫຍຸ້ງຍາກສົມຄວນ. ຍ້ອນແນວນັ້ນ, ຈຶ່ງໄດ້ຈັດກອງປະຊຸມທາບທາມຄຳເຫັນ ເພື່ອໃຫ້ຄະນະຮັບຜິດຊອບປັບປຸງກົດໝາຍສະບັບນີ້ ສາມາດເກັບກຳບັນດາຄຳເຫັນຕົວຈິງຢູ່ຂັ້ນພື້ນຖານ ເພື່ອປັບປຸງໃຫ້ສອດຄ່ອງກັບສະພາບການຂະຫຍາຍຕົວຂອງເສດຖະກິດ-ສັງຄົມໃນປັດຈຸບັນ.

ທ່ານ ສີວາເມັງ ລີບົວປາວ ໄດ້ສະເໜີຄວາມເປັນມາ, ເຫດຜົນ, ຄວາມຈຳເປັນ ແລະ ໂຄງສ້າງຂອງຮ່າງກົດໝາຍວ່າດ້ວຍທີ່ດິນ (ສະບັບປັບປຸງ) ລວມມີ XV ພາກ, 193 ມາດຕາ ເຊິ່ງໄດ້ກຳນົດຫຼັກການ, ລະບຽບການ ແລະ ມາດຕະການກ່ຽວກັບການຄຸ້ມຄອງແລະຕິດຕາມກວດກາວຽກງານທີ່ດິນ ເພື່ອເຮັດໃຫ້ວຽກງານດັ່ງກ່າວມີປະສິດທິຜົນແນໃສ່ຮັບປະກັນການປົກປັກຮັກສາ, ພັດທະນາ ແລະການນຳໃຊ້ທີ່ດິນ ຖືກຕ້ອງຕາມເປົ້າໝາຍ, ເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນດີຂຶ້ນ, ສັງຄົມມີຄວາມສະຫງົບ,ຄວາມເປັນລະບຽບຮຽບຮ້ອຍ ແລະ ຍຸຕິທຳ, ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດຕາມທິດທັນເປັນທັນສະໄໝ, ຍືນຍົງ ແລະ ເຮັດໃຫ້ທີ່ດິນມີມູນຄ່າເພີ່ມຂຶ້ນ ລວມທັງປົກປັກຮັກສາສິ່ງແວດລ້ອມ, ເຂດນ້ຳແດນດິນຂອງ ສປປລາວ.

ທີ່ດິນ ແມ່ນຊັບພະຍາກອນອັນລ້ຳຄ່າ ແລະ ທຶນຮອນອັນມະຫາສານຂອງຊາດ ທີ່ເປັນບ່ອນດຳລົງຊີວິດ ແລະ ທຳມາຫາກິນຂອງພົນລະເມືອງລາວ, ເປັນພາຫະນະອັນສຳຄັນ ແລະ ປັດໄຈຕົ້ນຕໍຂອງການຜະລິດ, ການພັດທະນາເສດຖະກິດ-ສັງຄົມ ແລະ ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ.

ກອງປະຊຸມຄັ້ງນີ້, ການນຳພະແນກກະສິກຳ ແລະ ສິ່ງແວດລ້ອມ 7 ແຂວງ ຍັງໄດ້ລາຍງານຫຍໍ້ກ່ຽວກັບຈຸດດີ ແລະ ຂໍ້ຄົງຄ້າງ ພາຍຫຼັງມອບວຽກງານຂຶ້ນທະບຽນອອກໃບຕາດິນແລະວຽກງານຈົດທະບຽນການເຄື່ອນໄຫວ ແລະ ການປ່ຽນແປງສິດນຳໃຊ້ທີ່ດິນ ໃຫ້ຫ້ອງການກະສິກຳ ແລະ ສິ່ງແວດລ້ອມເມືອງ-ນະຄອນ; ເຜີຍແຜ່ນິຕິກຳໃຕ້ກົດໝາຍທີ່ດິນ ໃນວຽກງານຮັບຮູ້ສິດນຳໃຊ້ທີ່ດິນໃນເຂດທີ່ດິນປ່າໄມ້, ວຽກງານການຂຶ້ນທະບຽນອອກໃບຕາດິນ, ວຽກງານຈົດທະບຽນການເຄື່ອນໄຫວ ແລະ ການປ່ຽນແປງສິດນຳໃຊ້ທີ່ດິນ, ວຽກງານປະເມີນລາຄາທີ່ດິນ, ວຽກງານຫັນປ່ຽນປະເພດທີ່ດິນ.

**(ຮຽບຮຽງຈາກເພຈ:ປະຊາຊົນ)**



# ສສຊ ແລະ ສສນວ ພົບປະຜູ້ມີສິດເລືອກຕັ້ງ



(ສພຂ) - ໃນວັນທີ 12 ມິຖຸນາຜ່ານມານີ້, ສະມາຊິກສະພາແຫ່ງຊາດ ( ສສຊ ) ຊຸດທີ X ປະຈຳເຂດເລືອກຕັ້ງທີ 1 ນະຄອນຫຼວງວຽງຈັນ (ນວ) ແລະ ສະມາຊິກສະພາປະຊາຊົນນະຄອນ ຫຼວງວຽງຈັນ (ສສນວ), ນຳໂດຍ ທ່ານ ປອ ໄຊສົມພອນ ພົມວິຫານກຳມະການກົມການເມືອງສູນກາງພັກ ປະທານສະພາແຫ່ງຊາດ ພ້ອມດ້ວຍຄະນະໄດ້ລົງພົບປະຜູ້ມີສິດເລືອກຕັ້ງ ແລະ ເຜີຍແຜ່ຜົນສຳເລັດກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນນະຄອນຫຼວງວຽງຈັນ ຊຸດທີ V ທີ່ສະໂມສອນກະຊວງປ້ອງກັນຄວາມສະຫງົບ (ສະໜາມມ້າ), ໃຫ້ການຕ້ອນຮັບໂດຍ ພົທ ວັນທອງ ກອງມະນີ ຄະນະເລຂາທິການສູນກາງພັກລັດຖະມົນຕີກະຊວງປກສ, ມີຮອງລັດຖະມົນຕີ, ຫົວໜ້າ-ຮອງຫົວໜ້າກົມໃຫຍ່, ຫ້ອງວ່າການ, ກົມ, ກອງບັນຊາການ, ພ້ອມດ້ວຍວິທະຍາຄານ, ກອງບັນຊາການ ປກສ ນວ ແລະ ນາຍຕຳຫຼວດນຳພາ-ບັນຊາຫຼັກແຫຼ່ງອ້ອມຂ້າງກະຊວງ ປກສ ເຂົ້າຮ່ວມ.

ໃນພິທີ, ໄດ້ຮັບຟັງການລາຍງານໂດຍຫຍໍ້ກ່ຽວກັບການຈັດຕັ້ງປະຕິບັດວຽກງານຂອງກະຊວງປ້ອງກັນຄວາມສະຫງົບໃນໄລຍະຜ່ານມາ ເຊິ່ງໄດ້ເອົາໃຈໃສ່ປະຕິບັດ ແລະ ປະສານສົມທົບຢ່າງໃກ້ຊິດກັບສະພາແຫ່ງຊາດ ໃນການສ້າງ, ປັບປຸງ ແລະຮັບຮອງບັນດານິຕິກຳຕ່າງໆ ໃນຂົງເຂດປ້ອງກັນຄວາມສະຫງົບ ເຮັດໃຫ້ການຄຸ້ມຄອງລັດ, ຄຸ້ມ ຄອງສັງຄົມດ້ວຍກົດໝາຍມີຄວາມໜັກແໜ້ນ, ສັງຄົມມີຄວາມສະຫງົບ ແລະ ເປັນລະບຽບຮຽບຮ້ອຍ. ຈາກນັ້ນ, ກໍໄດ້ຮັບຟັງການເຜີຍແຜ່ຜົນສຳເລັດກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ຊຸດທີ X (ດຳເນີນໃນວັນທີ 23-27 ມີນາ 2026) ໄດ້ພິຈາລະນາຮັບຮອງເອົາບັນດາວຽກງານສຳຄັນໃນຂົງເຂດສະພາແຫ່ງຊາດ, ລັດຖະບານ, ອົງການກວດກາ ແລະ ອົງການກວດສອບແຫ່ງລັດ. ພ້ອມທັງຮັບຟັງຜົນສຳເລັດກອງປະຊຸມຄັ້ງປະຖົມມະລຶກຂອງສະພາປະຊາຊົນ ນວ ຊຸດທີ V (ດຳເນີນໃນວັນທີ 1-3 ເມສາ 2026) ໂດຍການເປັນປະທານຂອງ ທ່ານ ປອ ອາດສະພັງທອງ ສີພັນດອນ ກຳມະການສູນກາງພັກ ເລຂາຄະນະພັກນວປະທານສະພາປະຊາຊົນນວ ຊຸດທີ V ໄດ້ຮັບຮອງເອົາຜົນການເລືອກຕັ້ງ, ບຸກຄະລາກອນອົງການອຳນາດລັດ, ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານ 5 ປີ ຄັ້ງທີ X (2026-2030) ຂອງ ນວ ພ້ອມກັບແຜນການເຄື່ອນໄຫວວຽກງານ ແລະ ແຜນການສ້າງນິຕິກຳຕ່າງໆ ຂອງອົງການຕຸລາການ ແລະ ອົງການກວດກາ-ກວດສອບ.

ໂອກາດນີ້, ທ່ານປະທານສະພາແຫ່ງຊາດ ໄດ້ສະແດງຄວາມຍ້ອງຍໍຕໍ່ຜົນສຳເລັດການປະຕິບັດວຽກງານຂອງກະຊວງປກສໃນໄລຍະຜ່ານມາ ແລະ ໄດ້ຮຽກຮ້ອງໃຫ້ຄະນະພັກ-ຄະນະບັນຊາທຸກຂັ້ນຕະຫຼອດຮອດນາຍ ແລະ ພົນຕຳຫຼວດ ສືບຕໍ່ເພີ່ມທະວີບົດບາດການນຳພາຂອງພັກ ເຂົ້າໃນການເຄື່ອນໄຫວວຽກງານຕາມກົດໝາຍວ່າດ້ວຍກຳລັງປ້ອງກັນຄວາມສະຫງົບ, ຮັບປະກັນຄວາມໂປ່ງໃສແລະຍຸຕິທຳໃນການດຳເນີນຄະດີ. ພ້ອມກັນນັ້ນ, ຕ້ອງເອົາໃຈໃສ່ສຶກສາອົບຮົມ,ຝຶກຝົນຫຼໍ່ຫຼອມຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ, ຕ້ານພະຍາດອາດຍາສິດ, ຍົກສູງລະບຽບວິໄນ ແລະ ຈັນຍາບັນ ເພື່ອເປັນອາວຸດອັນແຫຼມຄົມໃນການສະກັດກັ້ນ ແລະ ປາບປາມອາຊະ ຍາກຳທຸກຮູບແບບ ໂດຍສະເພາະ ອາຊະຍາກຳເອເລັກໂຕຣນິກ ແລະ ບັນຫາຢາເສບຕິດ ທີ່ນັບມື້ມີຄວາມທັນສະໄໝ ແລະ ສະຫຼັບສັບຊ້ອນ. ນອກນີ້, ຕ້ອງສືບຕໍ່ສ້າງພະລາທິການກັບທີ່ເພື່ອສ້າງຄວາມເຂັ້ມແຂງ ແລະ ເປັນທີ່ເພິ່ງຂອງປະຊາຊົນ, ເພີ່ມທະວີການພົວພັນຮ່ວມມືກັບປະເທດ ເພື່ອນມິດຍຸດທະສາດຢ່າງມີການເລືອກເຟັ້ນ.

ໃນຕອນທ້າຍ, ທ່ານຍັງໄດ້ສະແດງຄວາມຂອບໃຈຕໍ່ນາຍ ແລະ ພົນຕຳຫຼວດ ທີ່ໄດ້ໃຫ້ຄວາມເຊື່ອໝັ້ນປ່ອນບັດເລືອກຕັ້ງໃຫ້ເປັນ ສສຊ ແລະ ສສຂ ໃນວາລະນີ້ ເພື່ອສືບຕໍ່ຮັບໃຊ້ປະຊາຊົນ ໃນຂົງເຂດນິຕິບັນຍັດຕໍ່ໄປ;

ແລະເພື່ອພົບປະຜູ້ມີສິດເລືອກຕັ້ງ ແລະ ເຜີຍແຜ່ຜົນສຳເລັດກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ຊຸດທີ Xແລະສະພາປະຊາຊົນນະຄອນຫຼວງວຽງຈັນ ຊຸດທີ V ໃນວັນທີ 13 ມິຖຸນາ 2026 ທ່ານທະນົງໄຊ ຄຸດໄພທູນ ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 1 ນະຄອນຫຼວງວຽງຈັນ ຮອງປະທານສະພາປະຊາຊົນນະຄອນຫຼວງວຽງຈັນ ທ່ານ ນາງ ບົວວອນ ສຸກາລາແສງ ເລຂາພັກເມືອງ ຫົວໜ້າຄະນະສະມາຊິກສະພາປະຊາຊົນນະຄອນຫຼວງວຽງຈັນ ປະຈຳເຂດເລືອກຕັ້ງເມືອງໄຊເສດຖາ ທ່ານ ຈັນທະໄລ ໄຊຍະວົງ ຫົວໜ້າຫ້ອງການສາທາລະນະສຸກເມືອງໄຊເສດຖາ ສະມາຊິກສະພາປະຊາຊົນ ນະຄອນຫຼວງວຽງຈັນ (ສສ ນວ) ລົງພົບປະຜູ້ມີສິດເລືອກຕັ້ງ ແລະ ເຜີຍແຜ່ຜົນສຳເລັດກອງດັ່ງກ່າວຢູ່ໂຮງຮຽນມິດຕະພາບລາວ-ເກົາຫລີ (ມສ ນາຄວາຍ) ກ່າວຕ້ອນຮັບໂດຍທ່ານ ສຸລິຍາ ບຸດທະລາດ ຫົວໜ້າຄະນະຈັດຕັ້ງເມືອງໄຊເສດຖາ ມີຜູ້ມີສິດເລືອກຕັ້ງໃນຕາແຕງດຸງພັດທະນາ ແລະ ພະນັກງານກ່ຽວຂ້ອງເຂົ້າຮ່ວມ.

ທ່ານ ສຸລິຍາ ບຸດທະລາດ ໄດ້ລາຍງານການຄົ້ນຄວ້າການສ້າງຕັ້ງຕາແສງດຸງພັດທະນາ ຈາກນັ້ນ ສສຊ ແລະ ສສນວ ກໍໄດ້ຜັດປ່ຽນກັນຂຶ້ນເຜີຍແຜ່ຜົນສຳເລັດກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ຊຸດທີ XແລະສະພາປະຊາຊົນນະຄອນຫຼວງວຽງຈັນຊຸດທີVພ້ອມທັງຍົກໃຫ້ເຫັນບາງເນື້ອໃນສຳຄັນ ເພື່ອສ້າງຄວາມເຂົ້າໃຈໃຫ້ແກ່ຜູ້ເຂົ້າຮ່ວມກໍຄືພໍ່ແມ່ປະຊາຊົນ ເປັນຕົ້ນແມ່ນການພິຈາລະນາຮັບຮອງເອົາບັນຫາສຳຄັນຕ່າງໆ ຂອງລັດຖະບານ ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແຜນງົບປະມານແຫ່ງລັດ ການຈັດຕັ້ງປະຕິບັດລັດຖະທຳມະນູນ-ກົດໝາຍແລະບັນຫາສຳຄັນອັນພົ້ນເດັ່ນຕ່າງໆ ທີ່ຕິດພັນກັບການພັດທະນາປະເທດຊາດກໍຄືການດຳລົງຊີວິດປະຊາຊົນທົ່ວປະເທດ ສຳລັບກອງປະຊຸມຄັ້ງປະຖົມມະເລີກຂອງສະພາປະຊາຊົນ ນະຄອນຫຼວງວຽງຈັນ ຊຸດທີ V ໄດ້ຮັບຮອງເອົາບັນຫາສຳຄັນຕ່າງໆຂອງ ນວ ກຳນົດທິດທາງການພັດທະນານະຄອນຫຼວງວຽງຈັນ ໃນໄລຍະ 5 ປີຕໍ່ໜ້າ (2026-2030) ຄາດໝາຍສູ້ຊົນໃຫ້ເສດຖະກິດນະຄອນຫຼວງວຽງຈັນຂະຫຍາຍຕົວສະເລ່ຍ 8% ຕໍ່ປີ ກຳນົດມາດຕະການແກ້ໄຂບັນຫາເຄັ່ງຮ້ອນດ້ານເສດຖະກິດ ຮັບຮອງແຜນການສ້າງ ແລະ ປັບປຸງນິຕິກຳ ແລະ ອື່ນໆ.

ນອກຈາກນັ້ນກໍໄດ້ເປີດໂອກາດໃຫ້ຜູ້ເຂົ້າຮ່ວມປະກອບຄຳເຫັນ ແລະ ສະເໜີແລກປ່ຽນບັນຫາຄວາມຂັດຂ້ອງໝອງໃຈດ້ານຕ່າງໆເພື່ອໃຫ້ ສສຊ ແລະ ສສນວນຳໄປສະເໜີຕໍ່ພາກສ່ວນກ່ຽວຂ້ອງ ພິຈາລະນາແກ້ໄຂໃຫ້ຖືກຕ້ອງສອດຄ່ອງ ໃນນີ້ຜູ້ເຂົ້າຮ່ວມໄດ້ສະເໜີຫຼາຍບັນຫາເຊັ່ນການພັດທະນາພື້ນຖານໂຄງລ່າງ ໂດຍສະເພາະແມ່ນເສັ້ນທາງສາຍຫຼັກບາງບ່ອນມີການເປ່ເພແຕ່ບໍ່ໄດ້ຮັບການສ້ອມແປງມີຄວາມສ່ຽງຕໍ່ການເກີດອຸປະຕິເຫດເສັ້ນທາງເຊື່ອມຕໍ່ລະຫວ່າງບ້ານຕໍ່ບ້ານຫຼາຍເສັ້ນຍັງບໍ່ໄດ້ຮັບການສ້ອມແປງເຮັດໃຫ້ການສັນຈອນໄປມາພົບຄວາມຫຍຸ້ງຍາກການຈັດການບັນຫາຂີ້ເຫຍື້ອບັນຫາປະກົດການຫຍໍ້ທໍ້ໃນສັງຄົມ ແລະ ອື່ນໆ.

ແລະໃນວັນດຽວກັນ,ສະມາຊິກສະພາແຫ່ງຊາດ (ສສຊ) ແລະ ສະມາຊິກສະພາປະຊາຊົນນະຄອນຫຼວງວຽງຈັນ(ສສນວ) ກຸ່ມ 1, ລົງພົບປະຜູ້ມີສິດເລືອກຕັ້ງ ແລະ ເຜີຍແຜ່ຜົນສຳເລັດກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນ ນວ ຊຸດທີ V ທີ່ວັດອົງຕື້ ເມືອງຈັນທະບູລີ ນະຄອນຫຼວງວຽງຈັນ.



ໃຫ້ກຽດນຳພາຄະນະໂດຍສະຫາຍ ນາງ ສຸມາລີ ທຳມະວົງກຳມະການປະຈຳພັກນວ ເລຂາພັກເມືອງຈັນທະບູລີ, ເຂົ້າຮ່ວມຮັບຟັງ ມີບັນດາສະຫາຍກຳມະການປະຈຳພັກ,ຄະນະພັກເມືອງ,ເລຂາພັກບ້ານ-ນາຍບ້ານ, ພະນັກງານອາວຸໂສທະຫານ, ຕຳຫຼວດ, ນັກທຸລະກິດ, ຊາວຄ້າຂາຍ ຕະຫຼອດຮອດ ພໍ່, ແມ່, ປະຊາຊົນ ຈຳນວນ 7 ບ້ານ.

ຈຸດປະສົງ ເພື່ອພົບປະຜູ້ມີສິດເລືອກຕັ້ງ ແລະ ເຜີຍແຜ່ຜົນສຳເລັດກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນ ນວ ຊຸດທີ V, ເພື່ອຮັບຟັງຄຳຄິດຄຳເຫັນ, ຄຳສະເໜີຜູ້ມີສິດເລືອກຕັ້ງ ໂດຍສະເພາະແມ່ນກຳລັງປ້ອງກັນຄວາມສະຫງົບ ກ່ຽວກັບບັນຫາຂັດຂ້ອງໝອງໃຈຕ່າງໆ ເພື່ອຈະນຳສະເໜີຕໍ່ສະພາປະຊາຊົນ ນວ ແລະ ພາກສ່ວນທີ່ກ່ຽວຂ້ອງ. ເມືອງຈັນທະບູລີ ປະກອບມີ 30 ບ້ານ, ພົນລະເມືອງ 63,422 ຄົນ ຍິງ 33,511 ຄົນ, 12,347 ຄອບຄົວ, 13,086 ຫຼັງຄາເຮືອນ, ມີຊາຍແດນຕິດກັບເມືອງສີໂຄດຕະບອງ, ເມືອງສີສັດຕະນາກ, ເມືອງໄຊເສດຖາ ແລະ ເມືອງໄຊທານີ.

ໃນວາລາພົບປະຄັ້ງນີ້ ສສຊ-ສສນວ ໄດ້ຜັດປ່ຽນກັນລາຍງານເຜີຍແຜ່ວຽກງານທີ່ກ່ຽວຂ້ອງໃຫ້ກັບບັນດາຜູ້ມີສິດເລືອກຕັ້ງໄດ້ຮັບຊາບ.

ໃນວັນດຽວກັນ, ສສຊ ແລະ ສສນວ (ກຸ່ມທີ 2) ເຊິ່ງນຳໂດຍສະຫາຍ ນາງ ຈຳປາທອງທະລົງແສງຈັນກຳມະການຄະນະບໍລິຫານງານສູນກາງສະຫະພັນແມ່ຍິງ ຮອງປະທານສະມາຄົມນັກທຸລະກິດຍິງ ສະມາຊິກສະພາແຫ່ງຊາດ ຊຸດທີ X ປະຈຳເຂດເລືອກຕັ້ງທີ 1 ນວ ກໍໄດ້ລົງພົບປະກັບ ພໍ່, ແມ່ ປະຊາຊົນ 8 ບ້ານ ທີ່ວັດທົ່ງຂັນຄຳຂອງເມືອງຈັນທະບູລີ ນະຄອນຫຼວງວຽງຈັນ ເຊັ່ນກັນ.

ໃນວັນທີ 15 ມິຖຸນາ 2026 , ຢູ່ທີ່ສະໂມສອນ ເມືອງຫາດຊາຍຟອງ, ນະຄອນຫຼວງວຽງຈັນ ສະມາຊິກສະພາແຫ່ງຊາດ (ສສຊ)ປະຈຳເຂດເລືອກຕັ້ງທີ1 ແລະ ສະມາຊິກສະພາປະຊາຊົນ ນະຄອນຫຼວງວຽງຈັນ (ສສ.ນວ)ລົງພົບປະຜູ້ມີສິດເລືອກຕັ້ງ ແລະ ເຜີຍແຜ່ຜົນສຳເລັດຂອງກອງປະຊຸມສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນ ນະຄອນຫຼວງວຽງຈັນ ຊຸດທີ V ໃຫ້ແກ່ພະນັກງານຫຼັກແຫຼ່ງ, ພະນັກງານ-ລັດຖະກອນບັນດາຫ້ອງການອ້ອມຂ້າງເມືອງຫາດຊາຍຟອງ ໂດຍການນຳພາເຜີຍແຜ່ເອກະສານຂອງ ທ່ານ ທ່ານ ປອ ຕຸດາວັນ ຫໍ່ເມືອງເສດ ສະມາຊິກສະພາແຫ່ງຊາດ ຊຸດທີ X ປະຈຳເຂດເລືອກຕັ້ງທີ1 ນະຄອນຫຼວງວຽງຈັນ, ໂດຍການຕ້ອນຮັບຂອງ ທ່ານ ຄຳໝູນ ຕຽງທະລາດ ກຳມະການພັກນະຄອນຫຼວງວຽງຈັນ, ເລຂາພັກເມືອງ, ຫົວໜ້າຄະນະສະມາຊິກສະພາປະຊາຊົນນະຄອນຫຼວງວຽງຈັນ ຊຸດທີ V ປະຈຳເຂດເລືອກຕັ້ງເມືອງຫາດຊາຍຟອງ, ມີບັນດາທ່ານ ປະທານ-ຮອງປະທານຄະນະກຳມະການປົກຄອງເມືອງ-ຄະນະປະຈຳພັກ, ກຳມະການພັກເມືອງ ພ້ອມດ້ວຍພະນັກງານ-ລັດຖະກອນ ບັນດາຫ້ອງການ

ອ່ານຕໍ່ໜ້າ 4



# ຮອງປະທານ ສພຂ ຊຸກຍູ້ ແລະ ເກັບກຳ ຂໍ້ມູນບຸກຄະລາກອນ ຢູ່ 5 ເມືອງ



(ສພຂ)-ວັນທີ 11-12 ມິຖຸນານີ້, ທ່ານ ພູລຳພອນ ສີຫາວົງ, ກຳມະການປະຈຳພັກແຂວງ, ຮອງປະທານສະພາປະຊາຊົນແຂວງ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວຊຸກຍູ້ ແລະ ເກັບກຳຂໍ້ມູນບຸກຄະລາກອນ ຄະນະສະມາຊິກສະພາປະຊາຊົນແຂວງ (ສສຂ) ປະຈຳເຂດເລືອກຕັ້ງ ທີ່ເມືອງພະລານໄຊ, ເມືອງພິນ, ເມືອງເຊໂປນ, ເມືອງນອງ ແລະ ເມືອງວິລະບູລີ; ໂດຍການເຂົ້າຮ່ວມຂອງບັນດາທ່ານເລຂາຄະນະບໍລິຫານພັກເມືອງ, ການນຳເມືອງ, ຕາງໜ້າຄະນະຈັດຕັ້ງເມືອງ, ຫົວໜ້າຫ້ອງວ່າການເມືອງ, ຫົວໜ້າຫ້ອງການການເງິນເມືອງ, ພ້ອມດ້ວຍຄະນະ ສສຂ ປະຈຳເຂດເລືອກຕັ້ງເມືອງ ແລະ ຜູ້ປະສານງານທີ່ກ່ຽວຂ້ອງເຂົ້າຮ່ວມ.

ໃນການເຄື່ອນໄຫວໄດ້ມີການປຶກສາຫາລືຮ່ວມກັນ ແລະ ທົບທວນຄືນ ການຈັດຕັ້ງປະຕິບັດພາລະບົດບາດ, ການນຳພາ-ຊີ້ນຳ ຂອງຄະນະ ສສຂ ປະຈຳເຂດເລືອກຕັ້ງເມືອງ ໃນໄລຍະຜ່ານມາ ເພື່ອຕີລາຄາດ້ານດີ, ດ້ານອ່ອນ, ຂໍ້ຫຍຸ້ງຍາກ ແລະ ບົດຮຽນທີ່ຖອດຖອນໄດ້ ທັງແລກປ່ຽນຄວາມຄິດເຫັນ ແລະ ໃຫ້ຄຳແນະນຳບາງບັນຫາສຳຄັນ ເພື່ອໃຫ້ການຄຸ້ມຄອງ ແລະ ນຳໃຊ້ບຸກຄະລາກອນມີປະສິດທິຜົນສູງຂຶ້ນ; ພ້ອມນັ້ນ, ຍັງພ້ອມກັນຄົ້ນຄວ້າ ແລະ ປຶກສາຫາລືການປັບປຸງໂຄງຮ່າງການຈັດຕັ້ງ, ຫ້ອງການເຮັດວຽກ, ລວມເຖິງການກຽມຄວາມພ້ອມດ້ານບຸກຄະລາກອນ ທີ່ຈະເປັນເສນາທິການ ໃຫ້ແກ່ຄະນະ ສສຂ ປະຈຳເຂດເລືອກຕັ້ງເມືອງ ໃຫ້ມີຄວາມເຂັ້ມແຂງ ແລະ ສາມາດເຄື່ອນໄຫວວຽກງານໄດ້ຢ່າງມີປະສິດທິພາບສູງສຸດ; ສືບຕໍ່ເອົາໃຈໃສ່ວຽກງານການກໍ່ສ້າງ ແລະ ພັດທະນາບຸກຄະລາກອນ; ສ້າງຄວາມໂປ່ງໃສ ແລະ ຍຸຕິທຳ ໃນການບໍລິຫານບຸກຄະລາກອນ ເພື່ອໃຫ້ຕອບສະໜອງຕໍ່ໜ້າທີ່ວຽກງານໃນໄລຍະໃໝ່ໄດ້ຢ່າງມີປະສິດທິຜົນ.

ພ້ອມນັ້ນ ຍັງໄດ້ຢ້ຽມຢາມສະຖານທີ່ ທີ່ໄດ້ມີການໂຮບເຂົ້າກັນຂອງບາງຫ້ອງ ທີ່ຈະນຳໃຊ້ເປັນຫ້ອງການຄະນະ ສສຂ ປະຈຳເຂດເລືອກຕັ້ງເມືອງ.





## ສສຊ...

(ຕໍ່ຈາກໜ້າ 3)

ອ້ອມຂ້າງເມືອງເຂົ້າຮ່ວມ ຈຳນວນ 179 ທ່ານ, ຍິງ 78 ທ່ານ.

ທ່ານ ບົວໃສ ລຸນນະວົງສາ ປະທານ ຄະນະກຳມະການປົກຄອງເມືອງ ຫາດຊາຍຟອງ ໄດ້ສະຫຼຸບລາຍງານຫຍໍ້ໃນການຈັດຕັ້ງປະຕິບັດວຽກງານໃນໄລຍະທີ່ຜ່ານມາໃຫ້ຮູ້ວ່າ: ເມືອງຫາດຊາຍຟອງ ມີ 60 ບ້ານ, ມີ 36 ບ້ານຕັ້ງຢູ່ລຽບຕາມແມ່ນ້ຳຂອງ, ມີ 1770 ໜ່ວຍ, ມີ 23,085 ຫຼັງຄາເຮືອນ, ມີ 22,422 ຄອບຄົວ, ພົນລະເມືອງ ທັງໝົດ 106,910 ຄົນ, ຍິງ 54,568 ຄົນ, ການດຳລົງຊີວິດຂອງປະຊາຊົນສ່ວນຫຼາຍແມ່ນຊາວກະສິກຳ, ນອກນັ້ນແມ່ນພະນັກງານ, ນັກທຸລະກິດ, ຊາວຄ້າຂາຍ ແລະ ກຳມະກອນ.

ໂອກາດນີ້ສະມາຊິກສະພາແຫ່ງຊາດແລະສະມາຊິກສະພາປະຊາຊົນນະຄອນຫຼວງວຽງຈັນ ແຕ່ລະທ່ານ ໄດ້ຜັດປ່ຽນກັນເຜີຍແຜ່ຜົນສຳເລັດຂອງກອງປະຊຸມສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນນະຄອນຫຼວງວຽງຈັນ ຊຸດທີ V. ທັງນີ້ກໍເພື່ອແນໃສ່ເຮັດໃຫ້ສະມາຊິກພັກ, ພະນັກງານ-ລັດຖະກອນແຕ່ລະຫ້ອງການອ້ອມຂ້າງເມືອງມີຄວາມຮັບຮູ້, ເຂົ້າໃຈຢ່າງຖືກຕ້ອງ ມີຄວາມເປັນເອກະພາບສູງຕໍ່ເນື້ອໃນຈິດໃຈ ກໍຄືຜົນສຳເລັດຂອງກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ຊຸດທີ X ແລະ ສະມາຊິກສະພາປະຊາຊົນ ນະຄອນຫຼວງວຽງຈັນ ຊຸດທີ V ໃຫ້ມີຄວາມໜັກແໜ້ນເລິກເຊິ່ງ ຮັບປະກັນປະສິດທິພາບ ແລະ ປະສິດທິຜົນ.

ໃນທີ່ປະຊຸມ ສສຊ ແລະ ສສນວ ຍັງໄດ້ແລກປ່ຽນຫຼາຍບັນຫາສຳຄັນໃນການພັດທະນາເສດຖະກິດ ພ້ອມທັງຍັງໄດ້ຮັບຟັງບັນດາຄຳເຫັນ ແລະ ຂໍ້ສະເໜີ ຂອງຜູ້ເຂົ້າຮ່ວມ ເພື່ອນຳໄປໃຫ້ພາກສ່ວນກ່ຽວຂ້ອງສືບຕໍ່ແກ້ໄຂ.

ວັນດຽວກັນ, ສະມາຊິກສະພາແຫ່ງຊາດ ຊຸດທີ X ເຂດທີ 1 ນະຄອນຫຼວງວຽງຈັນແລະສະມາຊິກສະພາປະຊາຊົນ ນະຄອນຫຼວງວຽງຈັນ ຊຸດທີ V ເຂດເມືອງຫາດຊາຍຟອງ ທັງ 2 ສະພາໄດ້ຮ່ວມລົງພົບປະກັບຜູ້ມີສິດເລືອກຕັ້ງພະນັກງານ-ລັດຖະກອນພາຍໃນເມືອງ ແລະ ການຈັດຕັ້ງ 11 ບ້ານໃນ ກຸ່ມ 5 ທ່າເດື່ອ ຢູ່ສະໂມສອນປົກຄອງເມືອງຫາດຊາຍຟອງ ເພື່ອເຜີຍແຜ່ຜົນສຳເລັດກອງປະຊຸມຄັ້ງປະຖົມມະລຶກ ຂອງ ສສຊ ຊຸດທີ X ແລະ ສສນວ ຊຸດທີ V ເຊິ່ງນຳພາໂດຍ ທ່ານ ຕຸດາວັນ ໝື່ນເມືອງເສດ ສະມາຊິກສະພາແຫ່ງຊາດ ຊຸດທີ X ປະຈຳເຂດເລືອກຕັ້ງທີ 1 ນະຄອນຫຼວງວຽງຈັນ ແລະ ສະມາຊິກສະພາປະຊາຊົນ ນະຄອນຫຼວງວຽງຈັນ ຊຸດທີ V ນຳໂດຍທ່ານ ຄຳໝູນ ຕຽງທະລາດ ຫົວໜ້າຄະນະສະມາຊິກສະພາປະຊາຊົນ ນະຄອນຫຼວງວຽງຈັນເຂດເລືອກຕັ້ງເມືອງຫາດຊາຍຟອງ ໂດຍການຕ້ອນຮັບຂອງ ທ່ານ ບົວໃສ ລຸນນະວົງສາ ປະທານຄະນະກຳມະການປົກຄອງເມືອງຫາດຊາຍຟອງພ້ອມດ້ວຍຄະນະການນຳຂອງເມືອງ

ໃນໂອກາດດັ່ງກ່າວ ທ່ານ ບົວໃສ ລຸນນະວົງສາ ກໍໄດ້ກ່າວຕ້ອນ ຮັບ ແລະ ໄດ້ລາຍງານໃຫ້ຮູ້ຕໍ່ສະພາບລວມໂດຍສັງເຂບຂອງເມືອງຫາດຊາຟອງເຊິ່ງປັດຈຸບັນເມືອງຫາດຊາຍຟອງແມ່ນໄດ້ສຸມໃສ່ການຈັດຕັ້ງປະຕິບັດກະກຽມຄວາມພ້ອມ ແລະ ກຳນົດບາດກ້າວຕ່າງໆ ໃນການປະກາດສ້າງຕັ້ງຕາແສງ ຕາມແຜນການທີ່ຄາດໝາຍໄວ້ໃຫ້ສຳເລັດ ຈາກນັ້ນບັນດາທ່ານສະມາຊິກສະພາ ສສຊ ແລະ ສສນວ ກໍຍັງໄດ້ຜັດປ່ຽນ ແລະ ພ້ອມກັນນຳສະເໜີເຜີຍແຜ່ຕໍ່ກັບບັນດາເນື້ອໃນສຳຄັນຕ່າງໆ ໂດຍສະເພາະກໍແມ່ນຜົນສຳເລັດຂອງກອງປະຊຸມຄັ້ງປະຖົມມະລຶກຂອງສະພາທັງ 2 ທີ່ໄດ້ພ້ອມກັນພິຈາລະນາຮັບຮອງເອົາບັນດາວຽກງານສຳຄັນຢູ່ໃນແຕ່ລະຂົງເຂດ ຄື: ຂົງເຂດວຽກງານຂອງສະພາແຫ່ງຊາດ ຂົງເຂດວຽກງານຂອງລັດຖະບານ ຂົງເຂດວຽກງານຂອງອົງການກວດກາແຫ່ງລັດ ແລະ ອົງການກວດສອບແຫ່ງລັດ ຂົງເຂດວຽກງານຂອງສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນສູງສຸດ ຮັບຟັງກ່ຽວກັບຜົນສຳເລັດຂອງການເລືອກຕັ້ງ ແລະ ຢັ້ງຢືນຄຸນລັກສະນະຂອງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ຊຸດທີ V ພິຈາລະນາ ແລະ ຮັບຮອງເອົາການເລືອກຕັ້ງບັນດາຕຳແໜ່ງທີ່ສຳຄັນຂອງລັດ ແລະ ໂຄງປະກອບກົງຈັກການຈັດຕັ້ງຂອງອົງການອຳນາດລັດ ຮັບຮອງເອົາບົດລາຍງານກ່ຽວກັບແຜນການເຄື່ອນໄຫວວຽກງານ 5 ປີ 2026-2030 ຂອງສະພາແຫ່ງ ຊາດ ແລະ ຮັບຮອງເອົາແຜນການສ້າງ ແລະ ປັບປຸງກົດໝາຍ 5 ປີ 2026-2030 ຂອງສະພາແຫ່ງຊາດຊຸດທີ X ສ່ວນສະພາປະຊາຊົນ ນະຄອນຫຼວງວຽງຈັນ ກໍໄດ້ຮັບຮອງເອົາຜົນການເລືອກຕັ້ງ ແລະ ຢັ້ງຢືນຄຸນລັກສະນະຂອງສະມາຊິກສະພາປະຊາ ຊົນ ຊຸດທີ V ແລະ ກໍໄດ້ດຳເນີນການເລືອກຕັ້ງຕຳແໜ່ງສຳຄັນຕ່າງໆຂອງອົງການອຳນາດລັດ ຂັ້ນນະຄອນຫຼວງວຽງຈັນ ພ້ອມທັງຮັບຮອງເອົາແຜນພັດທະນາເສດຖະກິດ-ສັງຄົມ ແຜນງົບປະມານແຫ່ງລັດ 5 ປີ ຄັ້ງທີ X 2026-20230 ຂອງນະຄອນຫຼວງວຽງຈັນຮັບຮອງເອົາແຜນການເຄື່ອນໄຫວວຽກງານ 5 ປີ 2026-2030 ຂອງສະພາປະຊາຊົນ ນະຄອນຫຼວງວຽງຈັນ ຊຸດທີ V ແລະ ຮັບຮອງເອົາບັນຫາສຳຄັນອື່ນໆຂອງນະຄອນຫຼວງວຽງຈັນອີກດ້ວຍ.

ສະນັ້ນການລົງເຜີຍແຜ່ຜົນສຳເລັດກອງປະຊຸມຄັ້ງປະຖົມມະລຶກຄັ້ງນີ້ຂອງທັງ 2 ສະພາກໍເພື່ອເປັນການສ້າງໂອກາດ ແລະ ເງື່ອນໄຂທີ່ດີໃນການແລກປ່ຽນຄຳສະເໜີຄຳຄິດຄຳເຫັນຕ່າງໆລະ ຫວ່າງຜູ້ມີສິດເລືອກຕັ້ງກັບຕົວແທນຂອງປະຊາຊົນທີ່ສາມາດສະເໜີສ່ອງແສງເຖິງສະພາບ ແລະ ບັນຫາຕົວຈິງໃນສັງຄົມຕໍ່ປາກົດການຫຍໍ້ທໍ້ ຫຼື ບັນຫາອື່ນໆ ໄປຍັງພາກສ່ວນທີ່ກ່ຽວຂ້ອງຂອງພາກລັດ ເພື່ອໃຫ້ຊ່ວຍພິຈາລະນາແກ້ໄຂບັນຫາໃຫ້ຖືກຈຸດ ແລະ ກໍ່ເພື່ອສ້າງຄວາມເຊື່ອໝັ້ນໃຫ້ກັບສັງຄົມ ແລະ ປະຊາຊົນໄດ້ເປັນຢ່າງດີ.

ເຜີຍແຜ່ຜົນສຳເລັດກອງປະຊຸມຄັ້ງປະຖົມມະລຶກແຫ່ງຊາດ ແລະ ສະພາປະຊາຊົນ ນະຄອນຫຼວງວຽງຈັນ

ແລະ ໃນວັນທີ 15 ມິຖຸນາ, ທ່ານສົມບັດ ຈັນທະມາດ ກຳມະການໜ່ວຍພັກ ສະພາປະຊາຊົນ ຄະນະປະຈຳສະພາປະຊາຊົນ ນະຄອນຫຼວງວຽງຈັນ ປະທານຄະນະກຳມະການເສດຖະກິດ ແລະ ການເງິນ ສະພາປະຊາຊົນ ນະຄອນຫຼວງວຽງຈັນ ສະມາຊິກສະພາແຫ່ງຊາດ ຊຸດທີ X ປະຈຳເຂດເລືອກຕັ້ງທີ 1 ນະຄອນຫຼວງວຽງຈັນ ແລະ ທ່ານ ສຸລິວັນ ພົມມະຫາໄຊ ເລຂາພັກເມືອງນາຊາຍທອງ ຫົວໜ້າຄະນະສະມາຊິກສະພາປະຊາຊົນນະຄອນຫຼວງວຽງຈັນ ຊຸດທີ V ປະຈຳເຂດເລືອກຕັ້ງເມືອງນາຊາຍທອງ ພ້ອມດ້ວຍຄະນະ ລົງພົບປະຜູ້ມີສິດເລືອກຕັ້ງ ແລະ ເຜີຍແຜ່ຜົນສຳເລັດກອງປະຊຸມຄັ້ງປະຖົມມະເລີກຂອງສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນນະຄອນຫຼວງວຽງຈັນ ຊຸດທີV ຢູ່ສະໂມສອນເມືອງນາຊາຍທອງ ນະຄອນຫຼວງວຽງຈັນ ກ່າວຕ້ອນຮັບໂດຍທ່ານ ບຸນຊູ ພະວິເສດ ປະທານຄະນະກຳມະການປົກຄອງເມືອງນາຊາຍທອງ ແລະ ພະນັກງານກ່ຽວຂ້ອງເຂົ້າຮ່ວມ.

ຈຸດປະສົງຫຼັກ ເພື່ອພົບປະຜູ້ມີສິດເລືອກຕັ້ງ ແລະ ເຜີຍແຜ່ຜົນສຳເລັດກອງປະຊຸມຄັ້ງປະຖົມມະເລີກຂອງສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນນະຄອນຫຼວງວຽງຈັນ ຊຸດທີ V ແລະ ເພື່ອຮັບຟັງຄຳຄິດຄຳເຫັນ ຄຳສະເໜີຂອງພະນັກງານແຫຼ່ງແລະພະນັກງານອ້ອມຂ້າງເມືອງ ກ່ຽວກັບບັນຫາຂັດຂ້ອງໝອງໃຈຕ່າງໆ ເພື່ອສະເໜີຕໍ່ພາກສ່ວນກ່ຽວຂ້ອງ;

ແລະ ໃນຕອນບ່າຍຂອງວັນທີ 15 ມິຖຸນາຜ່ານມາຢູ່ທີ່ສະໂມສອນເມືອງສັງທອງ, ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 1 ແລະ ສະມາຊິກສະພາປະຊາຊົນນະຄອນຫຼວງວຽງຈັນ ໄດ້ລົງພົບປະຜູ້ມີສິດເລືອກຕັ້ງ ແລະ ເຜີຍແຜ່ຜົນສຳເລັດກອງປະຊຸມຄັ້ງປະຖົມມະລຶກ ຂອງສະພາແຫ່ງຊາດຊຸດທີ 10 ແລະ ສະພາປະຊາຊົນນະຄອນຫຼວງວຽງຈັນຊຸດທີ 5, ຢູ່ເມືອງສັງທອງ ເຊິ່ງນຳພາໂດຍທ່ານ ນາງ ບົວລະພັນ ທີລະສັກ, ທ່ານ ທະນົງສິດ ເມືອງຈັນ, ທ່ານ ຄຳສວຍ ອຸ່ນດາລາ.

ຕອນເຊົ້າຂອງວັນດຽວກັນນີ້ ສສຊ ແລະ ສສ.ນວ ຍັງໄດ້ລົງພົບປະຜູ້ມີສິດເລືອກຕັ້ງ ແລະ ເຜີຍແຜ່ຜົນສຳເລັດກອງປະຊຸມຄັ້ງປະຖົມມະລຶກ ຂອງສະພາແຫ່ງຊາດຊຸດທີ 10 ແລະ ສະພາປະຊາຊົນນະຄອນຫຼວງວຽງຈັນຊຸດທີ 5, ຢູ່ 2 ຈຸດຄື; ຈຸດທີ 1 ແມ່ນໄດ້ລົງພົບປະຜູ້ມີສິດເລືອກຕັ້ງຢູ່ຈຸບ້ານທີ 1 ແລະ ຈຸບ້ານທີ 2 ເຊິ່ງມີທັງໝົດ 15 ບ້ານ, ຢູ່ທີ່ຕະຫຼາດບ້ານຄຶກເພິງ





## ປະທານ...

(ຕໍ່ຈາກໜ້າ 1)

ອິບອຸ່ນ ແລະ ຕີລາຄາສູງຕໍ່ການຢ້ຽມຢາມລັດຖະກິດຢູ່ ສປປ ລາວ ຂອງທ່ານ ພົອ. ມິນ ອອງ ລາຍ ພ້ອມດ້ວຍຄະນະ ໃນຄັ້ງນີ້ ເຊິ່ງຖືເປັນປະເທດທຳອິດໃນອາຊຽນ ຂອງການເຄື່ອນໄຫວຕ່າງປະເທດ ພາຍຫຼັງດຳລົງຕຳແໜ່ງ; ການຢ້ຽມຢາມຄັ້ງນີ້ ເປັນຂີດໝາຍສຳຄັນທີ່ສະແດງໃຫ້ເຫັນເຖິງສາຍພົວພັນມິດຕະພາບອັນເປັນມູນເຊື້ອທີ່ດີງາມ, ຄວາມສາມັກຄີ ແລະ ການຮ່ວມມືອັນໃກ້ຊິດຖານປະເທດໃກ້ຄຽງທີ່ດີລະຫວ່າງ ລາວ-ມຽນມາ ໃຫ້ນັບມື້ນັບແໜ້ນແຟ້ນຍິ່ງໆຂຶ້ນ. ພ້ອມດຽວກັນນີ້, ທ່ານປະທານສະພາແຫ່ງຊາດ ຍັງໄດ້ສະແດງຄວາມຊົມເຊີຍຕໍ່ຜົນສຳເລັດໃນການຈັດການເລືອກຕັ້ງທົ່ວໄປ ແລະການຈັດຕັ້ງລັດຖະບານຊຸດໃໝ່ ຂອງ ສສ.ມຽນມາ ຢ່າງເປັນທາງການ ໃນໄລຍະຜ່ານມາ ພ້ອມທັງສະແດງຄວາມຊົມເຊີຍທ່ານ ພົອ. ມິນ ອອງ ລາຍ ທີ່ໄດ້ຮັບໄຊຊະນະໃນການເລືອກຕັ້ງ ແລະ ໄດ້ຮັບຄວາມໄວ້ເນື້ອເຊື່ອໃຈຈາກປະຊາຊົນມຽນມາ ໃຫ້ດຳລົງຕຳແໜ່ງເປັນປະທານາທິບໍດີ.

ໂອກາດນີ້, ທ່ານ ພົອ. ມິນ ອອງ ລາຍ ກໍໄດ້ສະແດງຄວາມຂອບໃຈຢ່າງຈິງໃຈຕໍ່ຄຳເວົ້າອັນຈິບງາມແລະການຕ້ອນຮັບອັນອົບອຸ່ນຂອງທ່ານ ໄຊສົມພອນ ພົມວິຫານ, ຄະນະປະຈຳສະພາແຫ່ງຊາດ, ສະມາຊິກສະພາແຫ່ງຊາດ ແລະ ປະຊາຊົນລາວບັນດາເຜົ່າ.

ໃນການພົບປະດັ່ງກ່າວ, ສອງຝ່າຍໄດ້ແຈ້ງສະພາບການພົ້ນເດັ່ນຂອງປະເທດຕົນໃຫ້ກັນຊາບ ພ້ອມທັງສະແດງຄວາມຊົມເຊີຍຕໍ່ບັນດາຜົນສຳເລັດອັນໃຫຍ່ຫຼວງໃນການພັດທະນາເສດຖະກິດ-ສັງຄົມ ທີ່ສອງປະເທດຍາດມາໄດ້ໃນໄລຍະຜ່ານມາ; ທັງສອງຝ່າຍຍັງໄດ້ສະແດງຄວາມປິຕິຍິນດີທີ່ເຫັນວ່າ ສາຍພົວພັນມິດຕະພາບອັນເປັນມູນເຊື້ອ ແລະ ການຮ່ວມມືອັນໃກ້ຊິດ ລະຫວ່າງ ລາວ-ມຽນມາ ໄດ້ຮັບການຮັດແໜ້ນ ແລະ ແຕກດອກອອກຜົນຍິ່ງໆຂຶ້ນ ເຊິ່ງສະແດງອອກໃນການຮ່ວມມືທາງດ້ານການເມືອງທີ່ມີຄວາມໜັກແໜ້ນ, ມີຄວາມໄວ້ເນື້ອເຊື່ອໃຈເຊິ່ງກັນແລະກັນ, ມີການສະໜັບສະໜູນຊ່ວຍເຫຼືອກັນດ້ວຍດີຕະຫຼອດມາ ແລະ ການນຳຂັ້ນສູງຂອງສອງປະເທດ ກໍໄດ້ມີການພົບປະແລກປ່ຽນການຢ້ຽມຢາມກັນຢ່າງປົກກະຕິ ທັງໃນຂອບສອງຝ່າຍ ແລະ ໂອກາດເຂົ້າຮ່ວມກອງປະຊຸມພາກພື້ນ ແລະສາກົນ. ພ້ອມດຽວກັນນັ້ນ, ສອງຝ່າຍກໍໄດ້ເຫັນດີເປັນເອກະພາບຕໍ່ທິດທາງແຜນການຮ່ວມມືກັນໃນຕໍ່ໜ້າ.

ນອກຈາກນີ້, ທ່ານ ໄຊສົມພອນ ພົມວິຫານ ຍັງໄດ້ຢືນຢັນວ່າ ສະພາແຫ່ງຊາດລາວ ຈະໃຫ້ການສະໜັບສະໜູນທາງດ້ານນິຕິບັນຍັດ ແລະ ການຕິດຕາມກວດກາການຜັນຂະຫຍາຍບັນດາບົດບັນທຶກຄວາມເຂົ້າໃຈ (MOU) ແລະ ສັນຍາຕ່າງໆ ທີ່ລັດຖະບານສອງຝ່າຍໄດ້ລົງນາມຮ່ວມກັນ ເພື່ອຈັດຕັ້ງປະຕິບັດໃຫ້ປາກົດຜົນເປັນຮູບປະທຳ ລວມທັງຕິດຕາມການຜັນຂະຫຍາຍຜົນການຢ້ຽມຢາມລັດຖະກິດໃນຄັ້ງນີ້ ໃຫ້ເກີດດອກອອກຜົນ ເພື່ອນຳເອົາຜົນປະໂຫຍດທີ່ແທ້ຈິງມາສູ່ປະຊາຊົນທັງສອງຊາດ ກໍຄືການສະໜັບສະໜູນເຊິ່ງກັນແລະກັນ ໃນເວທີພາກພື້ນ ແລະ ໃນໂລກ.

ໃນຂະນະດຽວກັນ, ທ່ານ ພົອ. ມິນ ອອງ ລາຍ ກໍໄດ້ສະແດງຄວາມຂອບໃຈຕໍ່ການຕ້ອນຮັບອັນອົບອຸ່ນ, ສະໜິດສະໜົມ ແລະ ເຕັມໄປດ້ວຍໄມຕີຈິດມິດຕະພາບ ພ້ອມທັງມີຄຳເຫັນສະໜັບສະໜູນໃຫ້ ມຽນມາ ແລະ ລາວ ສືບຕໍ່ສົ່ງເສີມການພົວພັນຮ່ວມມືດ້ານເສດຖະກິດ, ການຄ້າ ແລະ ການລົງທຶນ, ການສຶກສາ, ສາທາລະນະສຸກ, ການປ້ອງກັນປະເທດ ແລະ ອື່ນໆ ລະຫວ່າງສອງປະເທດ ໃຫ້ໄດ້ຮັບການຂະຫຍາຍຕົວຍິ່ງຂຶ້ນ.

## ກອງປະຊຸມ...

(ຕໍ່ຈາກໜ້າ 1)

ການເປັນປະທານຮ່ວມຂອງທ່ານ ໄຊສົມພອນ ພົມວິຫານ ປະທານຄະນະປະຈຳສະພາແຫ່ງຊາດ ແລະ ທ່ານ ສອນໄຊ ສີພັນດອນ ນາຍົກລັດຖະມົນຕີ; ໂດຍມີບັນດາທ່ານຮອງນາຍົກລັດຖະມົນຕີ, ຮອງປະທານຄະນະປະຈຳສະພາແຫ່ງຊາດ, ສະມາຊິກລັດຖະບານ, ກຳມະການຄະນະປະຈຳສະພາແຫ່ງຊາດ, ຮອງປະທານກຳມາທິການ ແລະ ຮອງຫົວໜ້າຫ້ອງວ່າການສະພາແຫ່ງຊາດ, ແລະ ຜູ້ຕາງໜ້າຈາກພາກສ່ວນກ່ຽວຂ້ອງ ເຂົ້າຮ່ວມ.

ກອງປະຊຸມຄັ້ງນີ້ ເປັນກອງປະຊຸມຄັ້ງທຳອິດລະຫວ່າງຄະນະລັດຖະບານຊຸດທີX ແລະ ຄະນະປະຈຳສະພາແຫ່ງຊາດຊຸດທີX ໂດຍມີຈຸດປະສົງເພື່ອພ້ອມກັນປຶກສາຫາລື, ແລກປ່ຽນຄຳເຫັນ ແລະ ສ້າງຄວາມເອກະພາບຕໍ່ບັນດາບັນຫາສຳຄັນທີ່ຈະນຳເຂົ້າພິຈາລະນາ ແລະ ຮັບຮອງເອົາໃນກອງປະຊຸມສະໄໝວິສາມັນເທື່ອທີ 1 ຂອງສະພາແຫ່ງຊາດ ຊຸດທີ X ທີ່ຈະຈັດຂຶ້ນໃນລະຫວ່າງວັນທີ 6-10 ກໍລະກົດນີ້ ເພື່ອພ້ອມກັນປຶກສາຫາລືບັນຫາສຳຄັນຂອງຊາດແນໃສ່ເຮັດໃຫ້ປະເທດຊາດມີສະຖຽນລະພາບທາງດ້ານການເມືອງທີ່ໜັກແໜ້ນ, ສັງຄົມມີຄວາມສະຫງົບໂດຍພື້ນຖານ, ເສດຖະກິດມີການຂະຫຍາຍຕົວຢ່າງຕໍ່ເນື່ອງ, ຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າ ໄດ້ຮັບການພັດທະນາ ແລະ ປັບປຸງນັບມື້ດີຂຶ້ນ ເຊິ່ງເປັນການຢັ້ງຢືນເຖິງຄວາມຮັບຜິດຊອບສູງຂອງສະພາແຫ່ງຊາດ ແລະລັດຖະບານຕໍ່ສູນກາງພັກ, ໃນການຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ ເຂົ້າສູ່ຊີວິດຕົວຈິງ.

ສຳລັບເນື້ອໃນທີ່ນຳມາປຶກສາຫາລືໃນກອງປະຊຸມ ມີບາງບັນຫາດັ່ງນີ້: ຕີລາຄາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ ໄລຍະ 6 ເດືອນຕົ້ນປີ ແລະ ແຜນວຽກຈຸດສຸມໄລຍະ 6 ເດືອນທ້າຍປີ 2026; ຮ່າງວາລະແຫ່ງຊາດ ວ່າດ້ວຍວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກຂອງປະຊາຊົນ; ມາດຕະການສົ່ງເສີມການຊົມໃຊ້ລົດໄຟຟ້າ ແລະ ພະລັງງານທົດແທນ; ທິດທາງການພັດທະນາແຮ່ທາດໃນໄລຍະໃໝ່ ພາຍໃຕ້ເງື່ອນໄຂໃໝ່.

ການດຳເນີນກອງປະຊຸມຄັ້ງນີ້, ບັນດາທ່ານລັດຖະມົນຕີ, ຜູ້ຕາງໜ້າຈາກກະຊວງ ທີ່ຮັບຜິດຊອບແຕ່ລະຫົວຂໍ້ນັ້ນ ໄດ້ລາຍງານຢ່າງກະທັດຮັດ, ສອດຄ່ອງກັບຄວາມເປັນຈິງ, ຍົກໃຫ້ເຫັນບັນຫາທີ່ເກີດຂຶ້ນຢ່າງຄົບຖ້ວນ ແລະ ສຸມໃສ່ສະເໜີບັນຫາທີ່ຂໍທິດຊີ້ນຳ ເພື່ອສ້າງຄວາມເປັນເອກະພາບໃນການຈັດຕັ້ງປະຕິບັດຕົວຈິງ; ບັນດາທ່ານຕາງໜ້າຄະນະປະຈຳສະພາແຫ່ງຊາດ ກໍໄດ້ມີການປະກອບຄຳເຫັນຕໍ່ບັນຫາດັ່ງກ່າວ ຢ່າງກົງໄປກົງມາ, ມີຈຸດສຸມ, ຊອກໃຫ້ເຫັນສາເຫດທີ່ເກີດຂຶ້ນແລະສະເໜີທິດທາງແກ້ໄຂທີ່ຊັດເຈນ ເພື່ອໃຫ້ລັດຖະບານ ໄດ້ນຳໄປຄົ້ນຄວ້າປັບປຸງບັນດາບົດລາຍງານຕ່າງໆ ໃຫ້ມີເນື້ອໃນຄົບຖ້ວນສົມບູນ, ຈະແຈ້ງ ແລະ ຮັດກຸມກວ່າເກົ່າ ເພື່ອຈະນຳໄປປຶກສາຫາລື ແລະ ຮັບຮອງໃນກອງປະຊຸມສະໄໝວິສາມັນເທື່ອທີ 1 ຂອງສະພາແຫ່ງຊາດ ຊຸດທີ X ທີ່ຈະຈັດຂຶ້ນໃນມໍ່ໆນີ້.



## ສສຊ...

(ຕໍ່ຈາກໜ້າ 1)

ອຸດສາຫະກຳແຮ່ທາດ ໂດຍສະເພາະແມ່ນຄຳທີ່ເປັນຊັບພະຍາກອນທຳມະຊາດອັນອຸດົມສົມບູນ ແລະ ມີທ່າແຮງບົ່ມຊ້ອນຂອງປະເທດ ໃຫ້ເກີດການຕໍ່ຍອດ, ເພີ່ມມູນຄ່າຢ່າງເຕັມສ່ວນ, ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ ສອດຄ່ອງຕາມທິດທາງຂອງກົມການເມືອງສູນກາງພັກ ໃນການຫັນປະເທດ ແລະ ລະບົບເສດຖະກິດແບບເພິ່ງພາ ກ້າວໄປສູ່ "ເສດຖະກິດເອກະລາດເປັນເຈົ້າຕົນເອງ ຫຼື ສອຈ" ໄດ້ຢ່າງໜັກແໜ້ນເຂັ້ມແຂງ.

ຈາກນັ້ນ, ທ່ານ ປະລິຍາ ນວນທະສິງ ຜູ້ອຳນວຍການໃຫຍ່ໂຮງງານກັ່ນຫຼອມ ວັດຖຸມີຄ່າ ລາວ-ສາກົນ ໄດ້ລາຍງານກ່ຽວກັບການດຳເນີນວຽກງານ ໂດຍສະຫຼຸບຄວາມຄືບໜ້າຂອງໂຄງການ, ການໃຫ້ບໍລິການວຽກງານແຕ່ລະດ້ານ ໂດຍໂຮງງານໄດ້ມຸ່ງໝັ້ນໃນການຍົກລະດັບການປະຕິບັດງານໃຫ້ສອດຄ່ອງກັບມາດຕະຖານສາກົນຂອງສະມາຄົມຕະຫຼາດຄຳແຫ່ງລອນດອນ ກໍຄື LBMA ດ້ວຍການນຳໃຊ້ນະວັດຕະກຳເຕັກໂນໂລຊີທັນສະໄໝ ທີ່ປະກອບດ້ວຍຫ້ອງກວດກາຄຸນນະພາບ ແລະ ເຄື່ອງຈັກອຸປະກອນລະບົບອັດຕະໂນມັດທີ່ທັນສະໄໝ, ມີຄວາມແມ່ນຢຳສູງ, ຮັບປະກັນການຜະລິດທີ່ສະອາດປາສະຈາກການທຳລາຍທຳມະຊາດ ແລະ ເປັນມິດກັບສິ່ງແວດລ້ອມ; ການຢຶດໝັ້ນໃນມາດຕະຖານ LBMA ບໍ່ພຽງເປັນການຢັ້ງ ຢືນເຖິງຄຸນນະພາບຄວາມບໍລິສຸດຂອງໂລຫະມີຄ່າເທົ່ານັ້ນ, ແຕ່ຍັງເປັນການສ້າງຄວາມເຊື່ອໝັ້ນ ແລະ ຍົກລະດັບຄວາມສາມາດໃນການແຂ່ງຂັນຂອງຜະລິດຕະພັນຈາກ ສປປລາວ ໃຫ້ກ້າວສູ່ເວທີການຄ້າສາກົນ ທີ່ທົ່ວໂລກຍອມຮັບ ແລະ ຊື້-ຂາຍແລກປ່ຽນໝູນວຽນໃນຕະຫຼາດຄຳໂລກໄດ້ ເຊິ່ງຈະເປັນກຸນແຈສຳຄັນສຳລັບການຂະຫຍາຍຕົວທາງດ້ານເສດຖະກິດ, ຄວາມໝັ້ນຄົງ, ສະຖຽນລະພາບຂອງສະກຸນເງິນ ແລະ ປະກອບສ່ວນເຂົ້າໃນການສ້າງຄັງສຳຮອງຄຳແຫ່ງຊາດ ໃຫ້ມີຄວາມໝັ້ນຄົງ ແລະ ເຂັ້ມແຂງຂຶ້ນເລື້ອຍໆ.

ນອກຈາກນັ້ນ, ທ່ານ ນາງ ສຸພາພອນ ສວນນະວົງ ຮອງຜູ້ອຳນວຍການໃຫຍ່ທະນາຄານຄຳລາວ ຍັງໄດ້ລາຍງານກ່ຽວກັບຜົນການດຳເນີນງານ ແລະ ທິດທາງການພັດທະນາຂອງທະນາຄານຄຳ ໂດຍມຸ່ງເນັ້ນການຍົກລະດັບມາດຕະຖານຜະລິດຕະພັນ ແລະ ການບໍລິການໃຫ້ສອດຄ່ອງກັບມາດຕະຖານສາກົນ, ສ້າງຄວາມໂປ່ງໃສ ຄວາມໜ້າເຊື່ອຖື ແລະ ພັດທະນານະວັດຕະກຳທາງການເງິນດ້ານຄຳເພື່ອສົ່ງເສີມຕະຫຼາດຄຳລາວ ແລະ ຍົກລະດັບອຸດສາຫະກຳຄຳຂອງປະເທດ ສູ່ການເຊື່ອມໂຍງກັບຕະຫຼາດຄຳສາກົນ.

ໂອກາດນີ້, ທ່ານ ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ ພ້ອມດ້ວຍບັນດາ ສສຊ ໄດ້ມີການສະແດງຄວາມດີໃຈທີ່ໄດ້ມີໂອກາດໄປເຫັນການດຳເນີນການຂອງໂຄງການລົງທຶນທີ່ສຳຄັນ, ຜັດປ່ຽນກັນເຈາະຈີ້ມຊັກຖາມ ກ່ຽວກັບໂຄງການດັ່ງກ່າວ ເພາະເປັນຂົງເຂດຜະລິດອັນໃຫຍ່ຂອງ ສປປ ລາວ ທັງເປັນໂຄງການທຳອິດທີ່ນຳໃຊ້ອຸປະກອນທັນສະໄໝໃນພາກພື້ນ. ທ່ານຮອງປະທານສະພາແຫ່ງຊາດ ໄດ້ສະແດງຄວາມຍ້ອງຍໍຊົມເຊີຍຜົນງານຜົນ ສຳເລັດຂອງທະນາຄານຄຳ ແລະ ໂຮງງານກັ່ນຫຼອມ ວັດຖຸມີຄ່າ ລາວ-ສາກົນ ໃນໄລຍະຜ່ານມາ, ສະແດງຄວາມດີໃຈ ແລະ ເຊື່ອໝັ້ນຕໍ່ຄວາມມຸ່ງໝັ້ນຂອງໂຮງງານກັ່ນຫຼອມ ວັດຖຸມີຄ່າ ລາວ-ສາກົນ ທີ່ມີມາດຕະຖານສູງ ແລະ ມີເປົ້າໝາຍທີ່ຊັດເຈນໃນການກ້າວສູ່ການກັ່ນຫຼອມຕາມມາດຕະຖານໂລກ ເຊິ່ງຈະເປັນການປະກອບສ່ວນສ້າງເສດຖະກິດຂອງ ສປປລາວ ໃຫ້ມີບາດກ້າວຂະຫຍາຍຕົວ; ທັງຢືນຢັນວ່າ ສະພາແຫ່ງຊາດ ຈະສືບຕໍ່ໃຫ້ການອຳນວຍຄວາມສະດວກ ໂດຍສະເພາະການປັບປຸງນິຕິກຳທີ່ຈຳເປັນຕໍ່ການຄຸ້ມຄອງອຸດສາຫະກຳຄຳ ເພື່ອເປັນພື້ນຖານອັນໜັກແໜ້ນໃນການຍົກລະດັບອຸດສາຫະກຳໃຫ້ໄດ້ມາດຕະຖານສາກົນ, ຍົກລະດັບຂີດຄວາມສາມາດໃນການແຂ່ງຂັນ ແລະ ສ້າງຄວາມເຊື່ອຖືໃນຕະຫຼາດສາກົນໃນຕໍ່ໜ້າ.

ລັດຖະສະພາຕ່າງປະເທດ

# ສະພານິຕິບັນຍັດສູງສຸດຂອງຈີນ ປິດກອງປະຊຸມຄະນະປະຈຳ

(Xinhua) - ຄະນະປະຈຳສະພາຜູ້ແທນປະຊາຊົນທົ່ວປະເທດຈີນ (NPC) ຊຸດທີ XIV ປິດກອງປະຊຸມຄັ້ງທີ 23 ເມື່ອວັນສຸກທີ 26 ມິຖຸນານີ້ ຫຼັງຈາກດຳເນີນເປັນເວລາ 4 ວັນ ໂດຍການເປັນປະທານຂອງ ຈ້າວ ເລີ້ຈີ້ປະທານຄະນະປະຈຳNPC.

ໃນວັນປິດກອງປະຊຸມ, ສະມາຊິກສະພາໄດ້ລົງຄະແນນສຽງຮັບຮອງເອົາກົດໝາຍເຄື່ອງໝາຍການຄ້າ (ປັບປຸງ) ແລະ ມະຕິວ່າດ້ວຍການປັບປຸງກົດໝາຍວ່າດ້ວຍຜູ້ກວດສອບບັນຊີຮັບອະນຸຍາດ; ກອງປະຊຸມຍັງໄດ້ລົງຄະແນນສຽງປົດ ກວນ ຈື້ໂອວ (Guan Zhi’ou) ອອກຈາກຕຳແໜ່ງລັດຖະມົນຕີກະຊວງຊັບພະຍາກອນທຳມະຊາດ.

ສີ ຈິ້ນຜິງ ໄດ້ລົງນາມໃນຄຳສັ່ງປະທານປະເທດ 2 ສະບັບ ເພື່ອປະກາດໃຊ້ກົດໝາຍ ແລະ ມະຕິດັ່ງກ່າວ, ແລະ ສະບັບທີ 3 ເພື່ອປະກາດມະຕິວ່າດ້ວຍການປ່ຽນແປງບຸກຄະລາກອນ.

ກອງປະຊຸມໄດ້ອະນຸມັດບັນຊີງົບປະມານປະຈຳປີ 2025 ຂອງລັດຖະບານກາງ, ບົດລາຍງານກ່ຽວກັບມາດຕະຖານຂອງຜູ້ແທນປະຊາຊົນ ແລະ ຮ່າງກົດໝາຍອື່ນໆທີ່ກ່ຽວຂ້ອງກັບບຸກຄະລາກອນ.

ຈ້າວ ຮຽກຮ້ອງໃຫ້ມີຄວາມພະຍາຍາມຫຼາຍຂຶ້ນໃນການອະທິບາຍຄວາມເປັນມາ, ຈຸດປະສົງ, ບົດບັນຍັດທີ່ສຳຄັນ ແລະ ຄວາມສຳຄັນຂອງກົດໝາຍ ເພື່ອສ້າງຄວາມເຂົ້າໃຈ ແລະ ການສະໜັບສະໜູນຈາກສາທາລະນະຊົນຢ່າງກວ້າງຂວາງສຳລັບກົດໝາຍໃໝ່; ໃນຂະນະດຽວກັນ, ກໍນຳໃຊ້ຂະບວນການນິຕິບັນຍັດເປັນໂອກາດໃນການຍົກສູງຄວາມຮັບຮູ້ທາງກົດໝາຍ ແລະ ສົ່ງເສີມການປົກຄອງລັດດ້ວຍກົດໝາຍ. ເຂົາຍັງຮຽກຮ້ອງໃຫ້ມີການສ້າງສັນນະວັດຕະກຳໃນການເຜີຍແຜ່ ແລະ ການຕີຄວາມໝາຍຂອງກົດໝາຍ, ພ້ອມທັງຮຽກຮ້ອງໃຫ້ມີການຮັບຟັງຄຳຄິດເຫັນຈາກສາທາລະນະຊົນຢ່າງກວ້າງຂວາງ ແລະ ນຳໃຊ້ຄວາມຮູ້ຂອງປະຊາຊົນໃນຂະບວນການນິຕິບັນຍັດໃຫ້ຫຼາຍຂຶ້ນ.

ກ່ອນປິດກອງປະຊຸມ, ຈ້າວ ໄດ້ເປັນປະທານກອງປະຊຸມຄະນະປະທານຄະນະປະຈຳສະພາ NPC ແລະ ຫຼັງຈາກນັ້ນ, ໄດ້ເປັນປະທານໃນການບັນລະຍາຍໃຫ້ແກ່ສະມາຊິກສະພານິຕິບັນຍັດ.



# Fiji ຈະຫ້າມສື່ສັງຄົມອອນລາຍ ສຳລັບເຍົາວະຊົນອາຍຸຕໍ່າກວ່າ 16 ປີ



(Xinhua) - ໃນສາທາລະນະລັດຟີຈີ ກຳລັງມີຄວາມຄືບໜ້າໃນການພະຍາຍາມທີ່ຈະຍົກອາຍຸການໃຊ້ສື່ສັງຄົມອອນລາຍສຳລັບເດັກຂຶ້ນເປັນ 16 ປີ.

ໜ່ວຍງານພິເສດດ້ານການເລື່ອນອາຍຸການໃຊ້ສື່ສັງຄົມອອນລາຍຂອງປະເທດຟີຈີ ໄດ້ຈັດກອງປະຊຸມຄັ້ງທີສອງຢູ່ນະຄອນຫຼວງຊູວາ (Suva) ເມື່ອວັນຈັນທີ 22 ມິຖຸນານີ້ ໂດຍການຫາລືໄດ້ສຸມໃສ່ການສະຫຼຸບຂອບເຂດສິດອຳນາດ ແລະ ໜ້າທີ່ຂອງໜ່ວຍງານພິເສດ ແລະ ຄວາມຄືບໜ້າຂອງແຜນການທີ່ຈະສະເໜີຮ່າງກົດໝາຍຕໍ່ລັດຖະສະພາໃນທ້າຍປີນີ້.

ໃນລະຫວ່າງກ່າວຄຳປາໄສຕໍ່ກອງປະຊຸມ, ລິນດາ ທາບູຢາ (Lynda Tabuya) ລັດຖະມົນຕີກະຊວງຖະແຫຼງຂ່າວ, ສິ່ງແວດລ້ອມ ແລະ ການປ່ຽນແປງດິນຟ້າອາກາດ ກ່າວວ່າ ຟີຈີ ຍັງສືບຕໍ່ຕິດຕາມສະຖານະການໃນປະເທດຕ່າງໆຢ່າງໃກ້ຊິດ ທີ່ໄດ້ເລີ່ມໃຊ້ ຫຼື ກຳລັງດຳເນີນການຕາມຂໍ້ຈຳກັດທີ່ຄ້າຍຄືກັນກ່ຽວກັບການເຂົ້າເຖິງສື່ສັງຄົມອອນລາຍສຳລັບເດັກ; ນາງເນັ້ນໜັກວ່າຂໍ້ຈຳກັດໃດໆທີ່ໃຊ້ຢູ່ຟີຈີ ຈະຕ້ອງປັບໃຫ້ເໝາະສົມກັບສະພາບການທາງວັດທະນະທຳ-ສັງຄົມທີ່ເປັນເອກະລັກສະເພາະຂອງປະເທດ.

ລັດຖະມົນຕີເນັ້ນໜັກວ່າ: ແນວທາງທີ່ກວມເອົາທຸກພາກສ່ວນຂອງສັງຄົມ ຈະເປັນສິ່ງສຳຄັນຢ່າງຍິ່ງຕໍ່ຄວາມສຳເລັດຂອງຮ່າງກົດໝາຍສະບັບນີ້ ໂດຍອີງການຈັດຕັ້ງຂອງລັດຖະບານ, ຜູ້ປົກຄອງ, ນັກການສຶກສາ, ຊຸມຊົນ ແລະ ພາກສ່ວນອຸດສາຫະກຳຕ່າງໆ ຈະຕ້ອງມີບົດບາດໃນການປົກປ້ອງເດັກໃນໂລກອອນລາຍ; ນາງກ່າວວ່າ ຄະນະກຳມະການຄວາມປອດໄພທາງອອນລາຍ ແລະ ຄະນະກຳມະການປະຕິຮູບກົດໝາຍ ຈະເຮັດວຽກຮ່ວມກັບລັດຖະບານ ເພື່ອສະເໜີຮ່າງກົດໝາຍຕໍ່ລັດຖະສະພາໃນທ້າຍປີນີ້ ເຊິ່ງຈະກຳນົດອາຍຸຕໍ່າສຸດໃນການເຂົ້າເຖິງສື່ສັງຄົມອອນລາຍ ໄວ້ທີ່ 16 ປີ.

# ອົດສະຕຣາລີ ຈະປັບໃໝສອງເທົ່າການລະເມີດ ກົດໝາຍຫ້າມໃຊ້ສື່ສັງຄົມສຳລັບເດັກອາຍຸຕໍ່າກວ່າ 16 ປີ



(REUTERS, Xinhua) - ແອນໂທນີ ອັລບາເນຊີ (Anthony Albanese) ນາຍົກລັດຖະມົນຕີອົດສະຕຣາລີ ກ່າວເມື່ອວັນທີ 26 ມິຖຸນານີ້ວ່າ ເຂົາຕ້ອງການເຮັດໃຫ້ແນ່ໃຈວ່າກົດໝາຍຫ້າມເດັກໃຊ້ສື່ສັງຄົມອອນລາຍຂອງປະເທດ ຈະເຂັ້ມງວດທີ່ສຸດເທົ່າທີ່ເປັນໄປໄດ້, ເນື່ອງຈາກຜົນການສຶກສາໃໝ່ສະແດງໃຫ້ເຫັນວ່າ ມາດຕະການດັ່ງກ່າວເຊິ່ງອົດສະຕຣາລີບັງຄັບໃຊ້ເປັນປະເທດທຳອິດໃນໂລກແລະດຳເນີນມາເປັນເວລາ 6 ເດືອນແລ້ວ ມີຜົນກະທົບຕໍ່ການໃຊ້ຂອງເຍົາວະຊົນໜ້ອຍຫຼາຍ.

ລັດຖະບານມີແຜນທີ່ຈະທົດສອບຄວາມເຂັ້ມງວດຂອງກົດໝາຍເຊິ່ງຫ້າມເວທີ (ແພລດຟອມ - platform) ຕ່າງໆເຊັ່ນ Instagram ຂອງ Meta ແລະ YouTube ຂອງ Google ບໍ່ໃຫ້ຜູ້ທີ່ມີອາຍຸຕໍ່າກວ່າ 16 ປີ ໃຊ້ບັນຊີໄດ້.

ອັລບາເນຊີ ກ່າວວ່າ “ສິ່ງທີ່ພວກເຮົາຕ້ອງການເຮັດ ແມ່ນການເຮັດໃຫ້ແນ່ໃຈວ່າກົດໝາຍເຫຼົ່ານີ້ ມີຄວາມເຂັ້ມງວດທີ່ສຸດເທົ່າທີ່ເປັນໄປໄດ້ ແລະ ມັນສາມາດຮັບມືກັບສິ່ງທ້າທາຍທາງກົດໝາຍທີ່ອາດຈະເກີດຂຶ້ນ”; ເຂົາກ່າວຕື່ມວ່າ: ຈຸດສຸມອັນໜຶ່ງຄືການຮັບປະກັນວ່າ ຄະນະກຳມະການຄວາມປອດໄພທາງອິນເຕີເນັດ ເຊິ່ງເປັນຜູ້ຄວບຄຸມອິນເຕີເນັດຂອງປະເທດ ມີສິດອຳນາດພຽງພໍທີ່ຈະປະຕິບັດໜ້າທີ່ໄດ້.

ຂະນະດຽວກັນ, ຄຳກ່າວຂອງ ອັລບາເນຊີ ມີຂຶ້ນຫຼັງຈາກບົດຄວາມໜຶ່ງທີ່ເຜີຍແຜ່ໃນອາທິດນີ້ລະບຸວ່າ ເຍົາວະຊົນຊາວອົດສະຕຣາລີຈຳນວນຫຼາຍ ຍັງສືບຕໍ່ໃຊ້ສື່ສັງຄົມອອນລາຍໃນໄລຍະ 3 ເດືອນຫຼັງຈາກມາດຕະການມີຜົນບັງຄັບໃຊ້ ແລະ ມີຫຼັກຖານພຽງເລັກໜ້ອຍທີ່ສະແດງໃຫ້ເຫັນວ່າການໃຊ້ສື່ສັງຄົມອອນລາຍຫຼຸດລົງ.

ນາຍົກລັດຖະມົນຕີກ່າວໃນຖະແຫຼງການເມື່ອຄືນວັນເສົາທີ 27 ມິຖຸນາວ່າ ບໍລິສັດເທັກໂນໂລຊີ ຍັງເຮັດບໍ່ພຽງພໍໃນການປະຕິບັດຕາມກົດໝາຍຫ້າມໃຊ້ສື່ສັງຄົມອອນລາຍສຳລັບເດັກອາຍຸຕໍ່າກວ່າ 16 ປີ; ເຂົາກ່າວວ່າ ລັດຖະບານຈະສະເໜີກົດໝາຍຕໍ່ລັດຖະສະພາເພື່ອເພີ່ມຄ່າປັບໃໝສູງສຸດສຳລັບບໍລິສັດສື່ສັງຄົມອອນລາຍທີ່ບໍ່ສາມາດປ້ອງກັນບໍ່ໃຫ້ເດັກອາຍຸຕໍ່າກວ່າ 16 ປີ ໃຊ້ເວທີຂອງຕົນ ຈາກ 49.5 ລ້ານໂດລາອົດສະຕຣາລີ (34.1 ລ້ານໂດລາສະຫະລັດ) ເປັນ 99 ລ້ານໂດລາອົດສະຕຣາລີ (68.3 ລ້ານໂດລາສະຫະລັດ).

ກົດໝາຍຫ້າມໃຊ້ສື່ສັງຄົມອອນລາຍທີ່ເປັນຄັ້ງທຳອິດຂອງໂລກ ມີຜົນບັງຄັບໃຊ້ໃນເດືອນທັນວາ 2025, ແຕ່ການສຶກສາທີ່ເຜີຍແຜ່ເມື່ອວັນພະຫັດໂດຍມະຫາວິທະຍາໄລນິວຄາສເຊິລ (Newcastle) ຂອງອົດສະຕຣາລີ ພົບວ່າຫຼາຍກວ່າ 85% ຂອງເດັກອາຍຸຕໍ່າກວ່າ 16 ປີ ຍັງໃຊ້ສື່ສັງຄົມອອນລາຍຢູ່ສາມເດືອນຫຼັງຈາກການບັງຄັບໃຊ້ກົດໝາຍ.

ນອກຈາກຄ່າປັບໃໝທີ່ເຂັ້ມງວດຂຶ້ນ, ອັລບາເນຊີ ກ່າວວ່າ ຈະເຮັດໃຫ້ຄະນະກຳມະການຄວາມປອດໄພທາງໄຊເບີຂອງລັດຖະບານ ມີອຳນາດຫຼາຍຂຶ້ນໃນການບັງຄັບໃຫ້ບໍລິສັດສື່ສັງຄົມອອນລາຍ ສະແດງຫຼັກຖານກ່ຽວກັບມາດຕະການທີ່ພວກເຂົາກຳລັງປະຕິບັດເພື່ອປ້ອງກັນບໍ່ໃຫ້ເດັກອາຍຸຕໍ່າກວ່າ 16 ປີ ໃຊ້ເວທີຂອງຕົນ.

# ສະພານິຕິບັນຍັດລັດເຊຍ ອະນຸມັດສິ່ງຈູງໃຈທາງພາສີ ເພື່ອຊຸກຍູ້ການຜະລິດນ້ຳມັນເຊື້ອໄຟ



(Xinhua) - ວັນພຸດທີ 24 ມິຖຸນານີ້, ສະພາດູມາແຫ່ງລັດເຊຍ ເຊິ່ງເປັນສະພາຕ່ຳຂອງລັດຖະສະພາ ໄດ້ອະນຸມັດການປັບປຸງປະມວນກົດໝາຍພາສີ ໂດຍມີເປົ້າໝາຍເພື່ອກະຕຸ້ນການຜະລິດນ້ຳມັນເຊື້ອໄຟ ແລະ ຮັບປະກັນການສະໜອງພາຍໃນປະເທດທີ່ໝັ້ນຄົງ.

ມາດຕະການທີ່ໄດ້ຮັບການສະໜັບສະໜູນຈາກລັດຖະບານ ໄດ້ນຳສະເໜີກົນໄກພາສີສິນຄ້າສຳລັບນ້ຳມັນແອັດຊັງທີ່ຜະລິດໂດຍການປະສົມນ້ຳມັນແອັດຊັງດິບ (ທີ່ກັ່ນແລ້ວ) ກັບສ່ວນປະກອບອື່ນໆ; ໃນຂະນະດຽວກັນ, ກໍອະນຸ ຍາດໃຫ້ໂຮງກັ່ນນ້ຳມັນທີ່ເຂົ້າເກນ ສາມາດຂໍຫັກພາສີສິນຄ້າຈາກຜົນຜະລິດດັ່ງກ່າວ.

ການປັບປຸງນີ້ ຍັງໃຫ້ເວລາຫຼາຍຂຶ້ນແກ່ໂຮງກັ່ນນ້ຳມັນທີ່ເຂົ້າຮ່ວມໂຄງການ ໃນການປັບປຸງໃຫ້ທັນສະໄໝເພື່ອປະຕິບັດພັນທະການລົງທຶນທີ່ຈຳເປັນ ເພື່ອຮັກສາຜົນປະໂຫຍດທາງພາສີ.

ນອກຈາກນັ້ນ, ກົດໝາຍຍັງປັບກົນໄກການຊົດເຊີຍນ້ຳມັນເຊື້ອໄຟຂອງລັດເຊຍ ເຊິ່ງຊົດເຊີຍຜູ້ຈຳໜ່າຍສຳລັບການຂາຍນ້ຳມັນແອັດຊັງໃນຕະຫຼາດພາຍໃນປະເທດ; ເລີ່ມຕັ້ງແຕ່ວັນທີ 1 ມິຖຸນາ 2026, ຄ່າສຳປະສິດການຊົດເຊີຍສຳລັບນ້ຳມັນແອັດຊັງທີ່ນຳເຂົ້າຈາກລັດສະມາຊິກຂອງສະຫະພາບເສດຖະກິດຢູຣາເຊຍ (Eurasian Economic Union) ໂດຍບໍລິສັດທີ່ໄດ້ຮັບອະນຸຍາດ ຈະຖືກກຳນົດໄວ້ທີ່0.9. ສຳລັບນ້ຳມັນແອັດຊັງທີ່ຜະລິດຢູ່ນອກກຸ່ມລັດສະມາຊິກ, ການຄິດໄລ່ຄ່າຊົດເຊີຍຈະໃຊ້ລາຄາທຽບເທົ່າການນຳເຂົ້າໂດຍອີງໃສ່ລາຄານ້ຳມັນແອັດຊັງທີ່ຄາດຄະເນໃນອິນເດຍ ແລະ ຕົ້ນທຶນການຂົນສົ່ງຈາກທ່າເຮືອອິນເດຍ.

ຂໍ້ກຳນົດໃໝ່ເຫຼົ່ານີ້ ຈະມີຜົນບັງຄັບໃຊ້ເມື່ອມີການປະກາດໃຊ້ກົດໝາຍຢ່າງເປັນທາງການ ແລະ ຈະມີຜົນຍ້ອນຫຼັງຕໍ່ສາຍພົວພັນທາງກົດໝາຍທີ່ເກີດຂຶ້ນຕັ້ງແຕ່ວັນທີ 1 ມິຖຸນາ 2026.

# South Sudan ກຳນົດວັນທີ 22 ທັນວາ ເປັນວັນເລືອກຕັ້ງຄັ້ງທຳອິດຫຼັງຈາກໄດ້ຮັບເອກະລາດ







(Xinhua) - ຄະນະກຳມະການເລືອກຕັ້ງແຫ່ງຊາດ (NEC) ຂອງຊູດັງໃຕ້ ປະກາດເມື່ອວັນຈັນທີ 22 ມິຖຸນາ 2026 ວ່າ ການເລືອກຕັ້ງທົ່ວໄປຄັ້ງທຳອິດຂອງປະເທດ ນັບຕັ້ງແຕ່ໄດ້ຮັບເອກະລາດໃນປີ 2011 ຈະຈັດຂຶ້ນໃນວັນທີ 22 ທັນວານີ້.

ເບື້ອງຕົ້ນກຳນົດໄວ້ໃນເດືອນທັນວາ 2024, ແຕ່ຖືກເລື່ອນອອກໄປຫຼັງຈາກຜູ້ນຳທາງການເມືອງຕົກລົງທີ່ຈະຂະຫຍາຍໄລຍະເວລາການປ່ຽນຜ່ານອອກໄປອີກສອງປີ ພາຍໃຕ້ຂໍ້ຕົກລົງສັນຕິພາບສະບັບປັບປຸງໃໝ່ປີ 2018.

ອາເບດເນໂກ ອາໂກກ ຄາຄູໂອລ (Abednego Akok Kacuol) ປະທານ NEC ກ່າວໃນການຖະແຫຼງຂ່າວທີ່ນະຄອນຫຼວງຈູບາ (Juba) ວ່າ ການປະກາດດັ່ງກ່າວ ແມ່ນສອດຄ່ອງກັບກົດໝາຍການເລືອກຕັ້ງແຫ່ງຊາດເຊິ່ງກຳນົດໃຫ້ຄະນະກຳມະການຕ້ອງປະກາດວັນເລືອກຕັ້ງລ່ວງໜ້າຢ່າງໜ້ອຍ 6 ເດືອນ ກ່ອນວັນເລືອກຕັ້ງຕົວຈິງ; ເຂົາກ່າວວ່າ ການຕັດສິນໃຈຂອງຄະນະກຳມະການ ສອດຄ່ອງກັບຂໍ້ຕົກລົງສັນຕິພາບສະບັບປັບປຸງ ແລະ ກົດໝາຍການເລືອກຕັ້ງແຫ່ງຊາດ, ໂດຍລະບຸວ່າ ໄລຍະເວລາດັ່ງກ່າວ ສອດຄ່ອງກັບຂໍ້ກຳນົດທາງກົດໝາຍສຳລັບການແຈ້ງລ່ວງໜ້າ.

ຄາຄູໂອລ ຮຽກຮ້ອງໃຫ້ລັດຖະບານເລັ່ງປັບປຸງບົດບັນຍັດກ່ຽວກັບການເລືອກຕັ້ງແລະກົດໝາຍທີ່ຍັງຄ້າງຢູ່ ແລະ ຈັດສັນຊັບພະຍາກອນທີ່ຈຳເປັນເພື່ອອຳນວຍຄວາມສະດວກໃນການກະກຽມການເລືອກຕັ້ງ;"ຄະນະກຳມະການກຳລັງປະເຊີນກັບສິ່ງທ້າທາຍຫຼາຍຢ່າງ ແລະ ພວກເຮົາຂໍຮ້ອງຢ່າງຍິ່ງ ໃຫ້ລັດຖະບານເລັ່ງປັບປຸງຊ່ອງວ່າງທາງກົດໝາຍທີ່ມີຢູ່ ແລະ ສະໜອງສິ່ງທີ່ຈຳເປັນທັງໝົດພາຍໃນໄລຍະເວລາອັນສັ້ນ ເພື່ອໃຫ້ພວກເຮົາສາມາດປະຕິບັດໜ້າທີ່ ແລະ ຄວາມຮັບຜິດຊອບຂອງພວກເຮົາໃນອີກບໍ່ເທົ່າໃດເດືອນຂ້າງໜ້າ" ເຂົາກ່າວ ທັງເສີມວ່າ ຄະນະກຳມະການຈະເຜີຍແຜ່ກຳນົດການເລືອກຕັ້ງໂດຍລະອຽດໃນໄວໆນີ້ ແລະ ຈະເລີ່ມດຳເນີນການລົງທະບຽນຜູ້ມີສິດເລືອກຕັ້ງຢ່າງຮີບດ່ວນ.

ຊູດັງໃຕ້ ໄດ້ເລື່ອນການເລືອກຕັ້ງຄັ້ງທຳອິດນັບຕັ້ງແຕ່ໄດ້ຮັບເອກະລາດຫຼາຍຄັ້ງ ເນື່ອງຈາກຄວາມຂັດແຍ້ງຢ່າງຕໍ່ເນື່ອງກ່ຽວກັບການຈັດຕັ້ງປະຕິບັດຂໍ້ຕົກລົງສັນຕິພາບທີ່ໄດ້ຮັບການຟື້ນຟູຄືນໃໝ່ໂດຍສະເພາະກ່ຽວກັບການຈັດລະບຽບຄວາມໝັ້ນຄົງແບບລວມສູນ, ການຮ່າງລັດຖະທຳມະນູນ ແລະ ການສ້າງຕັ້ງພື້ນຖານໂຄງລ່າງການເລືອກຕັ້ງທີ່ສຳຄັນ.

ຄວາມລ່າຊ້າເຫຼົ່ານີ້ ເຮັດໃຫ້ຜູ້ນຳທາງການເມືອງ ອະນຸມັດການຂະຫຍາຍໄລຍະເວລາການປ່ຽນຜ່ານອອກໄປອີກສອງປີ, ເຮັດໃຫ້ວັນເລືອກຕັ້ງເລື່ອນຈາກເດືອນທັນວາ 2024 ເປັນວັນທີ 22 ທັນວາ 2026.

# ສະພາ Nigeria ຜ່ານຮ່າງກົດໝາຍສ້າງຕັ້ງສຳນັກງານຕຳຫຼວດຂອງລັດ



(Xinhua) - ສະພາສູງນິເຊຣີ ໄດ້ຜ່ານຮ່າງກົດໝາຍສ້າງຕັ້ງສຳນັກງານຕຳຫຼວດຂອງລັດ ເພື່ອແກ້ໄຂບັນຫາສິ່ງທ້າທາຍດ້ານຄວາມປອດໄພ ເຊິ່ງປະເທດທີ່ມີປະຊາກອນຫຼາຍທີ່ສຸດໃນອາຟຣິກາຕາເວັນຕົກກຳລັງປະເຊີນ.

ເມື່ອປະທານາທິບໍດີໂບລາ ທິນູບູ (Bola Tinubu) ລົງນາມໃນກົດໝາຍແລ້ວ, ຮ່າງກົດໝາຍສະບັບນີ້ ເຊິ່ງໄດ້ຮັບການອະນຸມັດເມື່ອຕອນແລງວັນພຸດທີ 24 ມິຖຸນາ, ຈະປ່ຽນໂຄງສ້າງການບັງຄັບໃຊ້ກົດໝາຍຂອງປະເທດ ຈາກແບບລວມສູນໄປເປັນຮູບແບບລັດຖະບານກາງ (ສະຫະພັນ) ທີ່ອະນຸຍາດໃຫ້ແຕ່ລະລັດສາມາດສ້າງຕັ້ງ ແລະ ດຳເນີນການສຳນັກງານຕຳຫຼວດຂອງຕົນເອງ.

ໂອເປເຢມິ ບາມິເດເລ (Opeyemi Bamidele) ຜູ້ນຳສຽງສ່ວນໃຫຍ່ໃນສະພາສູງກ່າວລະຫວ່າງການອະພິປາຍທີ່ກອງປະຊຸມໃຫຍ່ຂອງສະພາສູງ ໂດຍອະທິບາຍວ່າກົດໝາຍສະບັບນີ້ເປັນຮ່າງກົດໝາຍຂອງຝ່າຍບໍລິຫານທີ່ສົ່ງມາໂດຍປະທານາທິບໍດີ ແລະ ກ່າວວ່າເປັນ "ໜຶ່ງໃນການປະຕິຮູບລັດຖະທຳມະນູນທີ່ສຳຄັນທີ່ສຸດໃນວິວັດທະນາການປະຊາທິປະໄຕຂອງປະເທດ".

ສະພາສູງຖະແຫຼງວ່າ ມາດຕະການນີ້ມີຄວາມຈຳເປັນ ເນື່ອງຈາກຄວາມຊັບຊ້ອນທີ່ເພີ່ມຂຶ້ນຂອງໄພຂົ່ມຂູ່ດ້ານຄວາມປອດໄພທົ່ວປະເທດ ລວມທັງການກໍ່ການຮ້າຍ, ການປຸ້ນຈີ້, ການລັກພາຕົວ, ຄວາມຮຸນແຮງໃນຊຸມຊົນ, ການປະທະກັນລະຫວ່າງຊາວກະສິກອນ ກັບ ຜູ້ລ້ຽງສັດ, ອາຊະຍາກຳທາງອິນເຕີເນັດ, ເຄືອຂ່າຍອາຊະຍາກຳທີ່ມີການຈັດຕັ້ງ ແລະ ອາຊະຍາກຳຂ້າມຊາດອື່ນໆ ເຊິ່ງໄດ້ສ້າງແຮງກົດດັນເພີ່ມຂຶ້ນຕໍ່ລະບົບຕຳຫຼວດທີ່ມີຢູ່.

ນິເຊຣີ ມີປະຊາກອນຫຼາຍກວ່າ 242 ລ້ານຄົນ, ເປັນສາທາລະນະລັດສະຫະພັນ ປະກອບດ້ວຍ 36 ລັດ ແລະ ເຂດແດນນະຄອນຫຼວງຂອງລັດຖະບານກາງຄື ອາບູຈາ (Abuja); ປະເທດນີ້ ມີລັກສະນະສະເພາະຄື: ມີຄວາມຫຼາກຫຼາຍທາງວັດທະນະທຳ, ພາສາ, ສະພາບທາງພູມສາດ,ສິ່ງທ້າທາຍດ້ານຄວາມປອດໄພ ແລະ ສະພາບເສດຖະກິດ-ສັງຄົມ.



## ກໝຍທ...

(ຕໍ່ຈາກໜ້າ 1)

ທານກຳມາທິການກົດໝາຍ ແລະ ຍຸຕິທຳ; ເຂົ້າຮ່ວມ ແລະ ໃຫ້ກຽດໂອ້ລົມຕໍ່ກອງປະຊຸມ ໂດຍສະຫາຍ ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ເລຂາຄະນະບໍລິຫານງານພັກ, ປະທານສະພາແຫ່ງຊາດ; ມີສະຫາຍ ກອງແກ້ວ ໄຊສິງຄາມ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ, ຜູ້ຊີ້ນຳ ກໝຍທ, ບັນດາສະມາຊິກພັກທີ່ເປັນຜູ້ແທນກອງປະຊຸມໃຫຍ່ ແລະ ແຂກຖືກເຊີນ ເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມໃຫຍ່ດຳເນີນໄປດ້ວຍບັນຍາກາດຟົດຟື້ນ, ບົນພື້ນຖານຄວາມສາມັກຄີເປັນເອກະພາບ, ເສີມຂະຫຍາຍສິດປະຊາທິປະໄຕ, ຄວາມຮັບຜິດຊອບສູງຂອງຜູ້ແທນກອງປະຊຸມ ໃນການຄົ້ນຄວ້າ, ຮັບຮອງເອົາບົດລາຍງານການເມືອງຂອງຄະນະພັກຮາກຖານກຳມາທິການກົດໝາຍ ແລະ ຍຸຕິທຳ ເຊິ່ງໄດ້ຕີລາຄາສະພາບການນຳພາໃນໄລຍະປີ 2021-2025 ແລະ ກຳນົດທິດທາງແຜນການຕໍ່ໜ້າ ປີ 2026-2030, ຮັບຟັງການປະກອບຄຳເຫັນຂອງຜູ້ຕາງໜ້າອົງການຈັດຕັ້ງມະຫາຊົນ ເຊິ່ງເປັນຄຳເຫັນທີ່ຢັ້ງຢືນຄວາມຖືກຕ້ອງ ແລະ ຄວາມເປັນຈິງຕໍ່ໝາກຜົນການນຳພາຊີ້ນຳຂອງຄະນະໜ່ວຍພັກຮາກຖານແລະຮັບຮອງເອົາບົດສຳຫຼວດການນຳພາລວມຂອງຄະນະພັກຮາກຖານ ກໝຍທ.

ໃນກອງປະຊຸມໃຫຍ່, ຜູ້ແທນຍັງໄດ້ໃຊ້ສິດປະຊາທິປະໄຕປ່ອນບັດເລືອກຕັ້ງເອົາຄະນະພັກຮາກຖານກຳມາທິການກົດໝາຍ ແລະ ຍຸຕິທຳ ຊຸດໃໝ່ຕາມມາດຕະຖານ-ເງື່ອນໄຂທີ່ກຳນົດໄວ້ ເຊິ່ງມີຜູ້ສະໝັກຮັບເລືອກຕັ້ງ9ສະຫາຍແລະເລືອກໄດ້ຄະນະພັກຊຸດໃໝ່ຈຳນວນ 7 ສະຫາຍ; ກອງປະຊຸມຄັ້ງປະຖົມມະລຶກໄດ້ເປັນເອກະພາບເລືອກເອົາສະຫາຍ ນາງ ທຸມມາລີ ວົງພະຈັນ ເປັນເລຂາ, ສະຫາຍ ສິງຄຳ ວົງພະຈັນ ເປັນຮອງເລຂາ, ສະຫາຍ ພູທອນ ວໍລະເພັດ, ສະຫາຍ ນາງ ພອນເພັດ ອຸ່ນແກ້ວ, ສະຫາຍ ນາງ ກັນທິນາ ປ້ານອິນທວນ, ສະຫາຍ ບຸນຍິງ ພົນເສນາ ແລະ ສະຫາຍ ພອນແກ້ວ ຕົ້ນວໍລະຈິດ ເປັນກຳມະການ ໃນນັ້ນ, ໄດ້ເລືອກຕັ້ງເອົາສະຫາຍ ພູທອນ ວໍລະເພັດ ເປັນປະທານກວດກາ ແລະ ສະຫາຍ ນາງ ພອນເພັດ ອຸ່ນແກ້ວ ເປັນຮອງປະທານກວດກາ. ພ້ອມກັນນີ້, ກອງປະຊຸມໃຫຍ່ຍັງໄດ້ເລືອກຕັ້ງເອົາຜູ້ແທນສົມບູນ 28 ສະຫາຍ ແລະ ຜູ້ແທນສຳຮອງ 3 ສະຫາຍ ເພື່ອໄປເຂົ້າຮ່ວມກອງປະຊຸມໃຫຍ່ຜູ້ແທນ ຄັ້ງທີ V ຂອງອົງຄະນະພັກສະພາແຫ່ງຊາດ ເຊິ່ງຈະເປີດຂຶ້ນໃນຕໍ່ໜ້າ.

ກອງປະຊຸມໃຫຍ່ໄດ້ຮັບຟັງການໂອ້ລົມຂອງສະຫາຍ ໄຊສົມພອນ ພົມວິຫານ ເຊິ່ງສະຫາຍໄດ້ຕີລາຄາສູງຕໍ່ຜົນສຳເລັດໃນການເຄື່ອນໄຫວວຽກງານໄລຍະຜ່ານ ແລະ ໃຫ້ທິດຊີ້ນຳບາງວຽກງານດັ່ງນີ້: ຄະນະພັກຮາກຖານຊຸດໃໝ່ ຕ້ອງໄດ້ແບ່ງງານ, ແບ່ງຄວາມຮັບຜິດຊອບພາຍໃນໃຫ້ຈະແຈ້ງ ເພື່ອນຳພາຊີ້ນຳວຽກງານຂອງກຳມາທິການໃຫ້ມີຜົນສຳເລັດ ແລະ ປາກົດຜົນເປັນຈິງ; ຈັດຕັ້ງເຜີຍແຜ່, ເຊື່ອມຊຶມເນື້ອໃນກອງປະຊຸມໃຫຍ່ຄັ້ງນີ້ ໄປໃຫ້ຖັນແຖວສະມາຊິກພັກ, ພະນັກງານເພື່ອຈັດຕັ້ງຜັນຂະຫຍາຍເຂົ້າໃນວຽກງານແຕ່ລະຂົງເຂດ ໃຫ້ເປັນແຜນງານໂຄງການແຕ່ລະດ້ານ ເພື່ອເປັນບ່ອນອີງໃຫ້ແກ່ການເຄື່ອນໄຫວວຽກງານໃນແຕ່ລະໄລຍະ; ສືບຕໍ່ປັບປຸງກົງຈັກ, ສັບຊ້ອນບຸກຄະລາກອນຂອງຕົນເຂົ້າໃສ່ແຕ່ລະຕຳແໜ່ງງານແລະກຳນົດລະບຽບການເຄື່ອນໄຫວວຽກງານຂອງກຳມາທິການ ແລະ ກົມທີ່ເປັນເສນາທິການ ໃຫ້ຈະແຈ້ງ, ສອດຄ່ອງຕາມກົດໝາຍ ແລະ ການມອບໝາຍຂອງຄະນະພັກ, ຄະນະປະຈຳສະພາແຫ່ງຊາດ; ສຶກສາອົບຮົມ, ກໍ່ສ້າງ, ບຳລຸງທາງດ້ານທິດສະດີ, ຄຸນທາດການເມືອງ, ຈັນຍາບັນຈັນຍາທຳໃຫ້ແກ່ສະມາຊິກພັກ, ພະນັກງານ-ລັດຖະກອນ; ປັບປຸງລະບອບແບບແຜນນຳພາຂອງຄະນະພັກຮາກຖານ ໃຫ້ແທດເໝາະ ແລະ ສອດຄ່ອງກັບສະພາບຕົວຈິງ, ຍຶດໝັ້ນຫຼັກການລວມສູນປະຊາທິປະໄຕຂອງພັກ, ນຳພາເປັນໝູ່ຄະນະ, ບຸກຄົນຮັບຜິດຊອບ, ສົ່ງເສີມຫົວຄິດປະດິດສ້າງ, ນຳໃຊ້ສະຕິປັນຍາລວມໝູ່ເປັນກຳລັງແຮງແຫ່ງການນຳພາຊີ້ນຳວຽກງານຂອງຄະນະພັກຮາກຖານ; ເຕົ້າໂຮມຄວາມສາມັກຄີພາຍໃນໃຫ້ໜັກແໜ້ນ, ເສີມຂະຫຍາຍປະຊາທິປະໄຕພາຍໃນພັກ, ບົນຈິດໃຈຕຳນິກໍ່ສ້າງຊ່ວຍເຫຼືອເຊິ່ງກັນແລະກັນ ຢ່າງມີວິທະຍາສາດ, ມີທັດສະນະມະຫາຊົນຖືກຕ້ອງ ແລະ ຊຸກຍູ້ໃຫ້ສະມາຊິກພັກ ແລະ ມະຫາຊົນ ມີສ່ວນຮ່ວມໃນທຸກວຽກງານ; ເພີ່ມທະວີການຄຸ້ມຄອງ, ກວດກາ ແລະ ປະເມີນສະມາຊິກພັກ, ພະນັກງານ-ລັດຖະກອນ ຕາມລະບຽບຂອງພັກ, ກົດໝາຍຂອງລັດ ຢ່າງເຂັ້ມງວດ, ສົ່ງເສີມວຽກງານຄົນເກັ່ງ ໂດຍປະຕິບັດລະບອບຍ້ອງຍໍ, ເລື່ອນຂັ້ນຕຳແໜ່ງແລະປະຕິບັດນະໂຍບາຍຢ່າງເໝາະສົມຕໍ່ຜູ້ທີ່ມີຜົນງານ ແລະ ປະຕິບັດມາດຕະການຢ່າງສົມເຫດສົມຜົນຕໍ່ຜູ້ລະເມີດ; ເພີ່ມທະວີການນຳພາຊີ້ນຳຢ່າງໃກ້ຊິດຕໍ່ກົມທີ່ເປັນເສນາທິການຂອງຕົນ ໃນການປະຕິບັດວຽກງານວິຊາສະເພາະ ເປັນແຕ່ລະໄລຍະ, ມີການມອບວຽກ, ສະຫຼຸບລາຍງານ ແລະ ຂໍທິດຊີ້ນຳຕາມຂັ້ນຕອນ ແນໃສ່ເຮັດໃຫ້ວຽກງານມີຜົນສຳເລັດຕາມແຜນການ, ຖືກຕ້ອງ, ສອດຄ່ອງກັບກົດໝາຍ ແລະ ບໍ່ໃຫ້ເກີດທາງສຽງຈົ່ມວ່າຈາກສັງຄົມ; ສະມາຊິກພັກແຕ່ລະສະຫາຍຕ້ອງໄດ້ເຊີດຊູຄວາມຮັບຜິດຊອບ, ຄວາມເປັນເຈົ້າການ ແລະ ສຸມສະຕິປັນຍາ, ປະດິດສ້າງ, ນຳໃຊ້ຄວາມຮູ້ຄວາມສາມາດຢ່າງມີວິທະຍາສາດ ໃນການປະຕິບັດໜ້າທີ່ການເມືອງທີ່ພັກ-ລັດມອບໝາຍໃຫ້.

**(ກົງທະນູຄຳ ພິພັດເສລີ)**




***#ບ່າວກະບື***

**ທ້າວ**ສີແຫຼ້ອວດກັບເພື່ອນເຂົາວ່າ:

"ໂຕກໍ່ຮູ້ແລ້ວວ່າ ເຮົາເປັນນັກສະສົມເຄື່ອງເກົ່າຂອງແກ່ທີ່ມີຊື່ສຽງ"

"ແມ່ນແລ້ວ, ເຮົາຮູ້ ເຮົາເຄີຍເຫັນເມຍໂຕມາແລ້ວ" ເພື່ອນເຂົາກ່າວຕອບ.

***#BAOKBU***

Silae is boasting to his friend.

"You know I am well-known collector of antiques"

"Yes I know, I have seen your wife" said his friend



## ຍົກສູງ...

(ຕໍ່ຈາກໜ້າ 1)

ເທື່ອທີ 1 ຂອງສະພາແຫ່ງຊາດ ຊຸດທີ X ໂດຍການເປັນປະທານກອງປະຊຸມຂອງທ່ານ ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ, ມີບັນດາທ່ານຮອງປະທານ ແລະ ກຳມະການຄະນະປະຈຳສະພາແຫ່ງຊາດ, ປະທານ-ຮອງປະທານສະພາປະຊາຊົນຂັ້ນແຂວງ ພ້ອມດ້ວຍ ສສຊ ແລະ ຫົວໜ້າຫ້ອງວ່າການສະພາປະຊາຊົນຂັ້ນແຂວງ 18 ເຂດເລືອກຕັ້ງ ເຂົ້າຮ່ວມຢ່າງພ້ອມພຽງ; ນອກນັ້ນ, ຍັງມີລັດຖະມົນຕີ ແລະ ຮອງລັດຖະມົນຕີ, ຕາງໜ້າກະຊວງ-ອົງການທີ່ກ່ຽວຂ້ອງ ກໍໄດ້ເຂົ້າຮ່ວມກອງປະຊຸມນີ້ເຊັ່ນກັນ.

ໃນພິທີກ່າວເປີດກອງປະຊຸມຍົກສູງຄຸນນະພາບດ້ານເນື້ອໃນຄັ້ງນີ້, ທ່ານ ນາງ ສູນທອນ ໄຊຍະຈັກ ໄດ້ເນັ້ນໜັກເຖິງຄວາມສຳຄັນ, ຈຳເປັນຂອງການຈັດກອງປະຊຸມ ເພື່ອກຽມຄວາມພ້ອມໃຫ້ແກ່ບັນດາສະມາຊິກສະພາແຫ່ງຊາດ ເຊິ່ງເປັນກົນໄກຂອງສະພາແຫ່ງຊາດໃນແຕ່ລະຊຸດມາແລ້ວ; ທ່ານຮອງປະທານສະພາແຫ່ງຊາດ ຍັງໄດ້ແຈ້ງກ່ຽວກັບຈຸດປະສົງຕົ້ນຕໍຂອງກອງປະຊຸມແມ່ນການຮັບຟັງລາຍງານການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ ໃນໄລຍະ 6 ເດືອນຕົ້ນປີ ແລະ ທິດທາງແຜນການ ໃນໄລຍະ 6 ເດືອນທ້າຍປີ2026, ການລາຍງານກ່ຽວກັບວາລະແຫ່ງຊາດວ່າດ້ວຍການພັດທະນາຊົນນະບົດແລະແກ້ໄຂຄວາມທຸກຍາກຂອງປະຊາຊົນ, ປຶກສາຫາລືກ່ຽວກັບຮ່າງກົດໝາຍ 2 ສະບັບ ທີ່ຕິດພັນກັບວາລະແຫ່ງຊາດດັ່ງກ່າວນັ້ນ ຄື: ກົດໝາຍວ່າດ້ວຍຄັງເງິນແຫ່ງລັດ (ສ້າງໃໝ່) ແລະ ກົດໝາຍວ່າດ້ວຍງົບປະມານແຫ່ງລັດ (ປັບປຸງ).

ໃນໄລຍະດຳເນີນກອງປະຊຸມ, ບັນດາທ່ານຮອງປະທານສະພາແຫ່ງຊາດ ໄດ້ຜັດປ່ຽນກັນເປັນປະທານກອງປະຊຸມ ໃນບັນດາບັນຫາທີ່ນຳເຂົ້າລາຍງານຕໍ່ກອງປະຊຸມຍົກສູງຄຸນນະພາບດ້ານເນື້ອໃນຄັ້ງນີ້; ບັນດາທ່ານ ສສຊ ໄດ້ຍົກສູງຄວາມຮັບຜິດຊອບຂອງຕົນ ໃນການປະກອບຄຳຄິດຄຳເຫັນຢ່າງກົງໄປກົງມາ, ມີເຫດຜົນ ແລະ ເປັນຜົນປະໂຫຍດຫຼາຍ ຕໍ່ບັນດາເອກະສານທີ່ລັດຖະບານນຳມາລາຍງານທັງຈະເປັນພື້ນຖານສຳຄັນໃນການສືບຕໍ່ປັບປຸງເນື້ອໃນໃຫ້ມີຄວາມຮັດກຸມ, ຈະແຈ້ງ ແລະ ສາມາດນຳເຂົ້າພິຈາລະນາ ແລະ ຮັບຮອງເອົາໃນກອງປະຊຸມສະໄໝວິສາມັນເທື່ອທີ 1 ຂອງ ສພຊ ຊຸດທີ X.

ກອງປະຊຸມຍົກສູງຄຸນນະພາບດ້ານເນື້ອໃນ ແມ່ນການສ້າງຄວາມເປັນເອກະພາບຢ່າງສູງຕໍ່ບັນດາເນື້ອໃນທີ່ຈະນຳມາປຶກສາຫາລື, ແລກປ່ຽນບົດຮຽນ, ຄຳຄິດຄຳເຫັນ ແລະ ມີການສະເໜີວິທີການແກ້ໄຂເພື່ອໃຫ້ພາກສ່ວນກ່ຽວຂ້ອງຂອງລັດຖະບານນຳໄປປັບປຸງແກ້ໄຂໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X.

**ຜູ້ຊີ້ນຳ**

ທ່ານ ເຂັມພອນ ອາໂນໄທ

**ຄະນະບັນນາທິການ**

ທ່ານ ບໍ ທານປະເສີດ ຫົວໜ້າ ບກ
ທ່ານ ເອລາວັນ ພັນທະລາວົງ ຮອງຫົວໜ້າ ບກ
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ
ທ່ານ ແກ້ວລະກາ ຊ້ອຍໄຊຍະ ຮອງຫົວໜ້າ ບກ

**ກອງບັນນາທິການ**

ທ່ານ ນາງ ວັນນາລີນ ສຸລິວົງສັກ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ
ທ່ານ ນາງ ສຸພາວັນ ທອມສະນິດ
ທ່ານ ນາງ ອາລີນ ສຸພົມມະປະດິດ

**ອອກແບບ - ຈັດໜ້າ**

ທ່ານ ນາງ ກຸກກິກ ບຸດດາໄຊ

**ຮູບພາບປະກອບ**

ທ່ານ ສອນສັກ ວັນວິໄຊ